ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------------

ນະຄອນຫຼວງວຽງຈັນ ເລກທີ /ຈຄນວ

ວັນທີ

# ຂໍ້ກຳນົດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ

*************************

ອີງຕາມ ມະຕິຕົກລົງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 03/ຄລສພ,ລົງວັນທີ 09/1/2012ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນກາງສະຫະພັນແມ່ຍິງລາວ.

ອີງຕາມ ກົດລະບຽບຂອງສະຫະພັນແມ່ຍິງລາວທີ່ໄດ້ຮັບຮອງເອົາໃນກອງປະຊຸມໃຫຍ່ ຜູ້ແທນແມ່ຍິງລາວ ທົ່ວປະເທດ ຄັ້ງທີ VI .

ອີງໃສ່ ຈຸດພິເສດ ແລະ ສະພາບຕົວຈິງ ຂອງນະຄອນຫຼວງວຽງຈັນ.

ອີງໃສ່ ຄວາມຮຽກຮ້ອງຕ້ອງການກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຫະພັນແມ່ຍິງນະຄອນຫວງວຽງຈັນ.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:

## ໝວດທີ I
## ວ່າດ້ວຍທີ່ຕັ້ງ ແລະ ພາລະບົດບາດ

### ມາດຕາ 1: ທີ່ຕັ້ງ

ສະຫະພັນແມ່ຍິງຂັ້ນ ນະຄອນຫຼວງວຽງຈັນ ແມ່ນອົງການຈັດຕັ້ງມະຫາຊົນ ຂັ້ນນະຄອນຫຼວງ
ວຽງຈັນ, ຈັດຕັ້ງ ແລະ ເຄື່ອນໄຫວພາຍໃຕ້ການຊີ້ນຳ-ນຳພາໂດຍກົງຂອງຄະນະພັກ,ອົງການປົກ

ຄອງນະຄອນຫຼວງວຽງຈັນມີຖານະທຽບເທົ່າ ອົງການຈັດຕັ້ງມະຫາຊົນ, ພະແນກການ ຂັ້ນນະຄອນ ຫຼວງ.

ສຳລັບສາຍຕັ້ງສະຫະພັນແມ່ຍິງ ແມ່ນພາຍໃຕ້ການຊີ້ນຳ ນຳພາຂອງສູນກາງສະຫະພັນແມ່ ຍິງລາວ.

## ມາດຕາ 2: ພາລະບົດບາດ:

2.1 ເປັນເສນາທິການ ໃຫ້ແກ່ຄະນະພັກ , ອົງການປົກຄອງນະຄອນຫຼວງ ໃນການຄົ້ນຄວ້າຜັນຂະຫຍາຍ ມະຕິ ຂອງອົງຄະນະພັກນະຄອນຫຼວງ ເຂົ້າໃນການພັດທະນາແມ່ຍິງ ໃນຂອບເຂດຄວາມ ຮັບຜິດຊອບ ຂອງຕົນ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ປະຕິບັດ ສິດ ສະເໝີພາບ ລະຫວ່າງ ຍິງຊາຍ ໃນຄອບຄົວ ແລະ ສັງຄົມ.

2.2 ສຶກສາອົບຮົມ ສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງບັນດາເຜົ່າ ໃຫ້ເຊື່ອມຊຶມ ແລະ ປະຕິບັດ ແນວທາງ ນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍຂອງລັດ ແຜນພັດທະນາເສດຖະກິດ ສັງຄົມຂອງນະຄອນ ຫຼວງ, ກົດລະບຽບຂອງສະຫະພັນແມ່ຍິງລາວ, ແຜນພັດທະນາແມ່ຍິງ, ສົນທິສັນຍາສາກົນ ທີ່ພົວພັນ ເຖິງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງແມ່ຍິງ ແລະ ເດັກນ້ອຍ.

2.3 ເຕົ້າໂຮມຄວາມສາມັກຄີ ປອງດອງ ແມ່ຍິງບັນດາເຜົ່າ, ປຸກລະດົມແມ່ຍິງປະກອບສ່ວນອະນຸລັກ ຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຄຸນລັກສະນະທີ່ເປັນ ມູນເຊື້ອ ຂອງແມ່ຍິງລາວບັນດາເຜົ່າ.

2.4 ເປັນຕົວແທນປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງແມ່ຍິງ ແລະ ເດັກນ້ອຍ.

# ໝວດທີ II
# ວ່າດ້ວຍໜ້າທີ່ ແລະ ຂອບເຂດສິດ

## ມາດຕາ 3: ໜ້າທີ່

1.1 ຄົ້ນຄວ້າເຊື່ອມຊຶມ, ຈັດຕັ້ງ ຜັນຂະແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ,ແຜນ ພັດທະນາເສດຖະກິດ - ສັງຄົມ ຂອງນະຄອນຫຼວງ ແລະ ແຜນພັດທະນາແມ່ຍິງລາວ; ນຳພາປະຕິ ບັດມະຕິ ກອງປະຊຸມໃຫຍ່ ຂັ້ນຂອງຕົນ ໃຫ້ປະສົບຜົນສຳເລັດ.

1.2 ເປັນຕົວແທນໃຫ້ແມ່ຍິງເຂົ້າຮ່ວມປຶກສາຫາລື ປະກອບຄໍາຄິດ ຄໍາເຫັນ, ນໍາສະເໜີຄະນະພັກ,ອົງການປົກຄອງຂັ້ນຂອງຕົນກ່ຽວກັບວຽກງານຕ່າງໆ ທີ່ພົວພັນເຖິງການພັດທະນາ ແລະປົກປ້ອງສິດ ແລະຜົນປະໂຫຍດອັນຊອບທໍາ ຂອງແມ່ຍິງ ແລະ ເດັກນ້ອຍ; ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງເຂົ້າໃນແຜນພັດທະນາແມ່ຍິງນະຄອນຫຼວງ ແລະ ການຈັດຕັ້ງປະຕິບັດສິດສະເໝີພາບ ລະຫວ່າງຍິງ - ຊາຍ ໃນຄອບຄົວ ແລະ ສັງຄົມ.

3.3 ສຶກສາອົບຮົມການເມືອງແນວຄິດ, ເສີມຂະຫຍາຍມູນເຊື້ອວັດທະນະທໍາ ອັນດີງາມຂອງຊາດ, ຄຸນລັກສະນະທີ່ເປັນມູນເຊື້ອອັນດີງາມຂອງແມ່ຍິງລາວບັນດາເຜົ່າ ໃຫ້ສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງ ຢ່າງກວ້າງຂວາງ.

3.4 ປະສານສົມທົບກັບຄະນະພັກ, ຄະນະຈັດຕັ້ງ, ພະແນກການກ່ຽວຂ້ອງ, ອົງການຈັດຕັ້ງມະຫາຊົນ ໃນການຂຶ້ນແຜນບໍາລຸງສ້າງ ແລະ ຍົກລະດັບ ຄວາມຮູ້ດ້ານທິດສະດີການເມືອງ, ວິຊາສະເພາະ, ວິຊາຊີບ, ພາສາຕ່າງປະເທດ, ວິທະຍາສາດເຕັກນິກ ໃຫ້ສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງບັນດາເຜົ່າ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່.

3.5 ປັບປຸງ ແລະ ຂະຫຍາຍການຈັດຕັ້ງສະຫະພັນແມ່ຍິງໃຫ້ກ້ວາງຂວາງ, ໜັກແໜ້ນ ເຂັ້ມແຂງ, ກໍ່ສ້າງ ແລະ ຂະຫຍາຍສະມາຊິກ ສະຫະພັນແມ່ຍິງ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ

3.6 ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ, ສະຫຼຸບ, ຖອດຖອນບົດຮຽນ ການເຄື່ອນໄຫວວຽກງານຮອບດ້ານ ຂອງສະຫະພັນແມ່ຍິງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ

3.7 ປະຕິບັດແນວທາງນະໂຍບາຍການຕ່າງປະເທດຂອງພັກ ໃນການພົວພັນຮ່ວມມືກັບສາກົນ ເພື່ອຍາດແຍ່ງເອົາບົດຮຽນ, ທຶນຮອນມາພັດທະນາແມ່ຍິງບັນດາເຜົ່າ ດ້ວຍຄວາມເປັນເຈົ້າ ແລະ ມີການເລືອກເຟັ້ນ.

3.8 ນໍາສະເໜີບັນຫາຕ່າງໆ ທີ່ພົວພັນເຖິງ ສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງແມ່ຍິງ ແລະ ເດັກນ້ອຍຕໍ່ຄະນະພັກ, ອົງການປົກຄອງ ແລະ ສະຫະພັນແມ່ຍິງຂັ້ນເທິງຖັດຕົນ ເພື່ອພິຈາລະນາແກ້ໄຂ

## ມາດຕາ 4: ຂອບເຂດສິດ

4.1 ເຂົ້າຮ່ວມການເຄື່ອນໄຫວວຽກງານຕ່າງໆຂອງຄະນະພັກ, ອົງການປົກຄອງ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະການຈັດຕັ້ງສັງຄົມອື່ນໆ ຕາມພາລະບົດບາດ ແລະ ໜ້າທີ່ຂອງຕົນ.

4.2 ຄົ້ນຄວ້າ ອອກຄໍາແນະນໍາໃຫ້ ສະຫະພັນແມ່ຍິງຂັ້ນລຸ່ມຖັດຕົນ ໃນການຈັດຕັ້ງ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ, ການເຄື່ອນໄຫວວຽກງານອື່ນໆ ທີ່ພົວພັນເຖິງການພັດທະນາ ແລະປົກປ້ອງສິດຜົນປະໂຫຍດອັນຊອບທໍາ ຂອງແມ່ຍິງ ແລະ ເດັກນ້ອຍ.

4.3 ເຂົ້າຮ່ວມປຶກສາຫາລື, ປະກອບຄໍາຄິດ, ຄໍາເຫັນ ແລະກວດການການເຄື່ອນໄຫວດ້ານຕ່າງໆ ນໍາຄະນະພັກ, ອົງການປົກຄອງ ຕາມພາລະບົດບາດ, ໜ້າທີ່ຂອງຕົນ.

4.4 ຄຸ້ມຄອງ, ຈັດວາງ ນຳໃຊ້ພະນັກງານ ແລະ ຄົ້ນຄວ້າ ສະເໜີນະໂຍບາຍ ດ້ານຕ່າງໆ ຕໍ່ຂັ້ນເທິງ ຖັດຕົນ ເຊັ່ນ: ການແຕ່ງຕັ້ງ, ເລື່ອນຊັ້ນຕຳແໜ່ງ, ເລື່ອນ ຊັ້ນ - ຂັ້ນ ເງິນເດືອນ, ຍ້ອງຍໍ, ປະຕິບັດວິໄນຕໍ່ພະ

ນັກງານ - ລັດຖະກອນ ແລະ ສະມາຊິກ ສະຫະພັນແມ່ຍິງ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

4.5 ຄົ້ນຄວ້ານຳສະເໜີ ກ່ຽວກັບໂຄງປະກອບການຈັດຕັ້ງ, ບຸກຄະລາກອນທີ່ຈະອອກຮັບສະໝັກເລືອກຕັ້ງເຂົ້າໃນຄະນະບໍລິຫານງານ ສະຫະພັນແມ່ຍິງ ຂັ້ນນະຄອນຫຼວງ ແລະ ຂັ້ນເມືອງ ຕໍ່ຂັ້ນເທິງຖັດຕົນ.

4.6 ສະເໜີຂໍ ອະນຸມັດເປີດກອງປະຊຸມໃຫຍ່ ແລະ ສະເໜີແຕ່ງຕັ້ງ ຄະນະບໍລິຫານງານ ສະຫະພັນແມ່ຍິງຊຸດໃໝ່ໃນຂັ້ນຂອງຕົນຕາມກົດລະບຽບທີ່ກຳນົດໄວ້.

- ອະນຸມັດຮັບສະມາຊິກ, ເປີດກອງປະຊຸມໃຫຍ່ ແລະ ແຕ່ງຕັ້ງຄະນະບໍລິຫານງານສະຫະພັນແມ່ຍິງຂັ້ນເມືອງ ແລະ ຄະນະໜ່ວຍອ້ອມຂ້າງນະຄອນຫຼວງວຽງຈັນ.

1.7 ໄດ້ຮັບຜົນປະໂຫຍດດ້ານຕ່າງໆຄືກັນກັບ ບັນດາການຈັດຕັ້ງ ມະຫາຊົນອື່ນໆ ຢູ່ໃນຂັ້ນນະຄອນຫຼວງ.

## ໝວດ ທີ III
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

### ມາດຕາ 5: ໂຄງປະກອບການຈັດຕັ້ງ

ກົງຈັກການຈັດຕັ້ງ ຂອງສະຫະພັນແມ່ຍິງ ຂັ້ນນະຄອນຫຼວງວຽງຈັນ ປະກອບມີ:

5.1 ຂະແໜງຫ້ອງການ, ສັງລວມ - ວາງແຜນ ແລະ ການເງິນ, ພົວພັນຮ່ວມມືກັບຕ່າງປະເທດ

5.2 ຂະແໜງຈັດຕັ້ງ - ນະໂຍບາຍ ແລະ ກວດກາ.

5.3 ຂະແໜງໂຄສະນາ, ອົບຮົມ, ວັດທະນະທຳ, ຂ່າວສານ ແລະ ຂະບວນການ.

5.4 ຂະແໜງປົກປ້ອງສິດຜົນປະໂຫຍດ ແມ່ຍິງ - ເດັກນ້ອຍ ແລະ ໃຫ້ຄຳປຶກສາ.

5.5 ຂະແໜງພັດທະນາແມ່ຍິງ.

5.6 ຂະແໜງກວດກາ

5.7 ສູນສຸຂະພາບ, ພັດທະນາແມ່ຍິງແລະ ໄວໜຸ່ມ ຍິງ - ຊາຍ.

5.8 ສູນຝຶກອົບຮົມວິຊາຊີບ ສະຫະພັນແມ່ຍິງນະຄອນຫຼວງວຽງຈັນ.

### ມາດຕາ6: ໜ້າທີ່ຂອງແຕ່ລະຂະແໜງການ

## 6.1 ຫ້ອງການ , ສັງລວມ - ວາງແຜນ, ການເງິນແລະ ພົວພັນຕ່າງປະເທດ

1. ຄົ້ນຄວ້າ, ສັງລວມຂໍ້ມູນຜົນງານ ການເຄື່ອນໄຫວວຽກງານຕ່າງໆ ຂອງສະຫະພັນແມ່ຍິງໃນນະຄອນຫຼວງວຽງຈັນ ເພື່ອສະຫຼຸບ, ວາງແຜນ ໄລຍະສັ້ນ, ໄລຍະຍາວ ລາຍງານສາຍຕັ້ງ - ສາຍຂວາງ ເປັນປົກກະຕິ.
2. ຄົ້ນຄວ້າ, ຮ່າງ ຄຳສັ່ງ, ຄຳແນະນຳ, ແຈ້ງການ, ໜັງສືສະເໜີຕ່າງໆ ພ້ອງທັງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ທັນເວລາ.
   - ຄຸ້ມຄອງການຈໍລະຈອນ, ເກັບມ້ຽນເອກະສານ ຕ່າງໆ ບໍ່ໃຫ້ຕົກເຮ່ຍເສຍຫາຍ.
3. ກະກຽມເນື້ອໃນເອກະສານ, ອຸປະກອນຕ່າງໆ ໃຫ້ແກ່ກອງປະຊຸມໃຫຍ່ ແລະ ກອງປະຊຸມຄົບຄະນະບໍລິຫານງານສະຫະພັນແມ່ຍິງຂັ້ນຂອງຕົນ.
4. ຄຸ້ມຄອງພາຫະນະ, ຊັບສົມບັດອຸປະກອນຕ່າງໆ ແລະ ຂື້ນແຜນກໍ່ສ້າງສ້ອມແປງ ອາຄານສະຖານທີ່ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.
5. ຂື້ນແຜນຄຸ້ມຄອງ, ນຳໃຊ້ງົບປະມານ ແລະ ທຶນ ຊ່ວຍເຫຼືອ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງຕາມລະບຽບຫຼັກການ.
6. ຄົ້ນຄວ້າ, ປະສານສົມທົບກັບພະແນກການ ທີ່ກ່ຽວຂ້ອງ ໃນການພົວພັນຮ່ວມມື ກັບຕ່າງປະເທດເພື່ອ
   ຍາດແຍ່ງເອົາບົດຮຽນ, ທຶນຮອນມາພັດທະນາ ແມ່ຍິງ ດ້ວຍຄວາມເປັນເຈົ້າ ແລະ ມີການເລືອກເຟັ້ນ.
7. ຮັບຜິດຊອບວຽກງານ ຮັບແຂກ ຂອງສະຫະພັນແມ່ຍິງ ນະຄອນຫຼວງ, ຊື້ປີ້ຍົນ, ຂອງຂັວນ, ຮັບສິ່ງຄະນະຜູ້ແທນ, ເຮັດບັດອວຍພອນ ເນື່ອງໃນໂອກາດວັນສຳຄັນຕ່າງໆ, ບັດເຊີນ, ງານພົບປະຢັ້ງມຢາມ ແລະ ອື່ນໆ.
8. ຕົບແຕ່ງ, ຈັດວາງຄວາມເປັນລະບຽບຮຽບຮ້ອຍ ສະອາດຈົບງາມພາຍໃນ ແລະ ອ້ອມຂ້າງຫ້ອງການສະຫະພັນແມ່ຍິງ ນະຄອນຫຼວງ.
9. ຈັດສິ່ງດອກໄມ້ອວຍພອນວັນຊາດ ແລະ ວັນສຳຄັນອື່ນໆ, ປະກອບເອກະສານຂໍອະນຸມັດໜັງສືຜ່ານແດນ ແລະ ວິຊາ ພ້ອມນັ້ນກໍ່ຂື້ນແຜນງົບປະມານຮັບແຂກຂັ້ນສູງພາຍໃນປະເທດ.

## 6.2 ຂະແໜງຈັດຕັ້ງ - ນະໂຍບາຍ

1. ເປັນເສນາທິການໃຫ້ແກ່ຄະນະພັກ, ຄະນະປະທານ ສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ ກ່ຽວກັບວຽກງານຈັດຕັ້ງພະນັກງານ ແລະ ວຽກງານກວດກາ.
2. ຄົ້ນຄວ້າກຳນົດລະອຽດກ່ຽວກັບພາລະບົດບາດ, ສິດ, ໜ້າທີ່, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີການເຮັດວຽກຂອງສະຫະພັນແມ່ຍິງໜ່ວຍອ້ອມຂ້າງນະຄອນຫຼວງ.

3. ຄົ້ນຄວ້າສະເໜີ, ຮ່າງຂໍ້ຕົກລົງແຕ່ງຕັ້ງ, ເລື່ອນຊັ້ນ - ຂັ້ນເງິນເດືອນ , ຍ້ອງຍໍ, ຍົກຍ້າຍ, ປົດຕຳແໜ່ງ ແລະ ປະຕິບັດລະບຽບວິໄນ ຕໍ່ພະນັກງານ - ລັດຖະກອນ, ສະມາຊິກສະຫະພັນແມ່ຍິງ, ແມ່ຍິງທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

4. ຄົ້ນຄວ້າ ທັງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຂຶ້ນແຜນບຳລຸງສ້າງພະນັກງານແຕ່ລະປະເພດ ແລະ ປະຕິບັດນະໂຍບາຍດ້ານຕ່າງໆ ຕໍ່ພະນັກງານ - ລັດຖະກອນ .

5. ຄົ້ນຄວ້າ,ຊັບຊ້ອນ ແລະຈັດວາງພະນັກງານ, ສະມາຊິກສະຫະພັນແມ່ຍິງ ຕາມຂອບເຂດສິດ, ໜ້າທີ່ຂອງຕົນ.

6. ເກັບກຳສະຖິຕິການຈັດຕັ້ງ, ການກໍ່ສ້າງ ແລະ ຂະຫຍາຍສະມາຊິກສະຫະພັນແມ່ຍິງ ໃຫ້ມີຄວາມຖືກຕ້ອງ ແລະ ຊັດເຈນ ທັງສະຫຼຸບລາຍງານ ໃຫ້ສູນກາງສະຫະພັນແມ່ຍິງລາວ ຕາມກຳນົດເວລາທີ່ວາງໄວ້.

## 6.3 ຂະແໜງໂຄສະນາ,ອົບຮົມ, ວັດທະນະທຳ, ຂ່າວສານ ແລະ ຂະບວນການ

1. ຄົ້ນຄວ້າແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍຂອງລັດ, ກົດລະບຽບຂອງສະຫະພັນແມ່ຍິງລາວ, ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຜູ້ແທນແມ່ຍິງລາວທົ່ວປະເທດ, ສະຫະພັນແມ່ຍິງ ນະຄອນຫຼວງ ສ້າງເປັນເອກະສານ ເພື່ອສຶກສາອົບຮົມ, ເຜີຍແຜ່ ໃຫ້ສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງ ບັນດາເຜົ່າ, ບັນດາຊັ້ນຄົນໃຫ້ແທດເໝາະກັບແຕ່ລະເປົ້າໝາຍ.

2. ຈັດຕັ້ງປາຖະກາຖາມູນເຊື້ອຂອງຊາດ, ຂອງພັກ, ຂອງອົງການຈັດຕັ້ງສະຫະພັນແມ່ຍິງ, ມູນເຊື້ອວັດທະນະທຳອັນດີງາມຂອງຊາດ ແລະ ຄຸນລັກສະນະ ທີ່ເປັນມູນເຊື້ອ ອັນດີງາມຂອງແມ່ຍິງ ໃຫ້ກວ້າງຂວາງ.

3. ຕິດຕາມເກັບກຳຂໍ້ມູນຂ່າວສານ, ຜົນງານຂະບວນການເຄື່ອນໄຫວດ້ານຕ່າງໆ ຂອງສະຫະພັນແມ່ຍິງ ເພື່ອອອກຂ່າວໃຫ້ທັນເວລາ ທັງເປັນການຊຸກຍູ້, ສົ່ງເສີມ ທົວຄິດປະດິດສ້າງ ວຽກດີຄົນເດັ່ນ ແລະ ຄອບຄົວຕົວແບບໃນດ້ານຕ່າງໆ.

4. ອະນຸລັກ, ປົກປັກຮັກສາ ແລະ ສົ່ງເສີມສີໄມ້ລາຍມື ທີ່ເປັນມູນເຊື້ອຂອງແມ່ຍິງລາວ

- ຄົ້ນຄວ້າສ້າງ ແລະ ປັບປຸງຫ້ອງວາງສະແດງມູນເຊື້ອຂອງແມ່ຍິງ ພ້ອມທັງເກັບກຳຂໍ້ມູນ, ວັດຖຸພັນກ່ຽວກັບການເຄື່ອນໄຫວ, ຜົນງານທີ່ພົ້ນເດັ່ນໃນດ້ານຕ່າງໆຂອງແມ່ຍິງ ມາວາງສະແດງ ແລະ ຂຽນເປັນເອກະສານປະຫັວດການເຄື່ອນໄຫວ ຂອງສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ.

5. ນຳພາ, ຊຸກຍູ້ ການຈັດຕັ້ງປະຕິບັດຂະບວນແຂ່ງຂັນ 3 ດີ ໃຫ້ເປັນຂະບວນຟົດຟື້ນກ້ວາງຂວາງ ແລະ ມີປະສິດທິຜົນ.

## 6.4 ຂະແໜງປົກປ້ອງສິດຜົນປະໂຫຍດ ແມ່ຍິງ - ເດັກນ້ອຍ ແລະໃຫ້ຄຳປຶກສາ

1 ຄົ້ນຄວ້າ , ປະກອບຄຳເຫັນ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ,ລັດຖະທຳມະນູນ, ກົດໝາຍຂອງລັດ ໂດຍສະເພາະກົດໝາຍວ່າດ້ວຍການພັດທະນາ ແລະປົກ

ປ້ອງສິດຜົນປະໂຫຍດອັນເປັນທຳ ຂອງແມ່ຍິງ ແລະ ເດັກນ້ອຍ, ເຮັດໃຫ້ການສົ່ງເສີມ ສິດສະເໝີພາບ ລະຫວ່າງ ຍິງ - ຊາຍ ໃນຄອບຄົວ ແລະ ສັງຄົມ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງຖືກຕ້ອງ ແລະ ກາຍເປັນຮູບປະທຳ ນັບມື້ ຫຼາຍຂຶ້ນ.

2. ໃຫ້ຄຳປຶກສາແກ່ແມ່ຍິງທີ່ມີບັນຫາໃຫ້ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ.

## 6.5 ຂະແໜງ ພັດທະນາແມ່ຍິງ.

1. ຄົ້ນຄວ້າສ້າງແຜນພັດທະນາແມ່ຍິງ ໃນແຕ່ລະດ້ານ, ແຕ່ລະໄລຍະ ໂດຍອີງໃສ່ແຜນພັດທະນາເສດຖະກິດ -ສັງຄົມຂອງ ນະຄອນຫຼວງວຽງຈັນ, ແຜນພັດທະນາແມ່ຍິງລາວ ແລະ ມະຕິກອງປະຊຸມໃຫຍ່ ຂອງສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ ໃຫ້ເປັນແຜນງານ, ໂຄງການພັດທະນາແມ່ຍິງ ໃນຂັ້ນຂອງຕົນ.

2. ສ້າງເງື່ອນໄຂໃຫ້ສະມາຊິກສະຫະພັນແມ່ຍິງ, ແມ່ຍິງບັນດາເຜົ່າໃຫ້ໄດ້ເຂົ້າເຖິງແຫຼ່ງທຶນ ດ້ວຍການສ້າງແລະປັບປຸງ ກອງທຶນພັດທະນາແມ່ຍິງ, ກອງທຶນອື່ນໆ ທັງຄຸ້ມຄອງ ແລະ ນຳໃຊ້ກອງທຶນ ໃຫ້ຖືກຕ້ອງຕາມລະບຽບການ.

3. ຕິດຕາມຊຸກຍູ້ ການຜະລິດທຸລະກິດຂະໜາດນ້ອຍ, ຂະໜາດກາງ ຂອງແມ່ຍິງ ແລະ ປະສານສົມທົບ
ກັບຂະແໜງການກ່ຽວຂ້ອງ ໃນການຊ່ວຍເຫຼືອເອື້ອຍນ້ອງແມ່ຍິງ ໃນການດຳເນີນທຸລະກິດ ໃຫ້ມີປະສິດທິຜົນ.

## 6.6. ຂະແໜງກວດກາ

1. ຂຶ້ນແຜນການກວດກາ, ເກັບກຳຂໍ້ມູນສະພາບຮອບດ້ານ ຂອງສະຫະພັນແມ່ຍິງ ແລະ ດຳເນີນການກວດກາຢ່າງປົກກະຕິຕໍ່ເນື່ອງ ໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ-ຄຳສັ່ງຕ່າງໆຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິກອງປະຊຸມໃຫຍ່ສະຫະພັນແມ່ຍິງແຕ່ລະຂັ້ນທີ່ຂຶ້ນກັບຕົນ, ພ້ອມທັງຕີລາຄາສັງລວມຜົນຂອງການກວດກາແຕ່ລະຄັ້ງໃຫ້ຈະແຈ້ງ ແລ້ວລາຍງານ ໃຫ້ຄະນະປະທານສະຫະພັນແມ່ຍິງ, ຄະນະກວດກາພັກ-ລັດ ຂັ້ນຂອງຕົນ ແລະ ກົມກວດກາສູນກາງສະຫະພັນແມ່ຍິງລາວຮັບຊາບ.

2. ຕິດຕາມ, ຊຸກຍູ້, ກວດກາການປະຕິບັດສິດ, ໜ້າທີ່ຂອງສະມາຊິກສະຫະພັນແມ່ຍິງ ຕາມທີ່ໄດ້ກຳນົດໃນກົດລະບຽບຂອງສະຫະພັນແມ່ຍິງລາວ ແລະ ລະບອບແບບແຜນວິທີເຮັດວຽກ, ວິທີການນຳພາ ຂອງຄະນະນຳສະຫະພັນແມ່ຍິງໃນຂັ້ນຂອງຕົນ.

3. ຕິດຕາມ, ຊຸກຍູ້, ກວດກາ ການເຄື່ອນໄຫວປະຕິບັດແຜນພັດທະນາແມ່ຍິງ, ການຄຸ້ມຄອງ ແລະ ການນຳໃຊ້ທຶນຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ແລະ ການຈັດຕັ້ງສັງຄົມຂັ້ນຕົ້ນ.

4. ຮັບຈົດໝາຍຮ້ອງຟ້ອງຂໍຄວາມເປັນທຳ ຂອງສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງບັນດາເຜົ່າ ໃນຂອບເຂດຄວາມຮັບຜິດຊອບ ຂອງສະຫະພັນແມ່ຍິງໃນຂັ້ນຂອງຕົນ, ແລ້ວປະສານສົມທົບກັບ ພາກສ່ວນກ່ຽວຂ້ອງ ເພື່ອຊອກຫາວິທີແກ້ໄຂບັນຫາໃຫ້ຖືກຕ້ອງ ແລະສອດຄ່ອງກັບຄວາມເປັນຈິງ.

5. ປະສານສົມທົບກັບພາກສ່ວນກ່ຽວຂ້ອງເພື່ອຕິດຕາມ, ຊຸກຍູ້, ການປະຕິບັດນະໂຍບາຍຕໍ່ພະນັກ ງານ-ລັດຖະກອນເພດຍິງ ເຊັ່ນ: ການຮັບເອົາລັດຖະກອນ, ການບັນຈຸ-ຊັບຊ້ອນພະນັກງານເຂົ້າ ໃນຕຳແໜ່ງງານ, ການເລື່ອນຊັ້ນ-ຂັ້ນເງິນເດືອນ, ການເບິ່ງແຍງປິ່ນປົວສຸຂະພາບ, ການອອກຮັບ ເບ້ຍບຳນານ, ບຳເນັດ ແລະ ນະໂຍບາຍອື່ນໆ.

6. ຕິດຕາມ, ຊຸກຍູ້, ກວດກາການປັບປຸງການຈັດຕັ້ງ ຂອງສະຫະພັນແມ່ຍິງຂັ້ນຂອງຕົນ ໃຫ້ມີຄວາມ ເຂັ້ມແຂງ ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ.

7. ດຳເນີນກວດກາ ແລະ ສະກັດກັ້ນປະກົດການຫຍໍ້ທໍ້, ການສໍ້ລາດບັງຫຼວງ ທີ່ຂຶ້ນກັບຄວາມ ຮັບຜິດຊອບຂອງສະຫະພັນແມ່ຍິງຂັ້ນຂອງຕົນ.

8. ກວດກາການຂຶ້ນແຜນງົບປະມານ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານຂອງຄະນະສະຫະພັນແມ່ຍິງ ຂັ້ນຂອງຕົນ ແລະ ການນຳໃຊ້ເງິນບຳລຸງ ຂອງສະມາຊິກສະຫະພັນແມ່ຍິງແຕ່ລະຂັ້ນ.

9. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ຄະນະກວດກາພັກ-ລັດ ຂັ້ນແຂວງ, ນະຄອນຫຼວງ, ຂັ້ນເມືອງ ເພື່ອອຳນວຍຄວາມສະດວກ ໃນການເຄື່ອນໄຫວດຳເນີນການກວດກາ ແລະ ຮ່ວມມືໃນ ການແກ້ໄຂບັນຫາທີ່ກວດກາເຫັນຕາມຂອບເຂດຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ.

10. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຄະນະພັກ ແລະ ຄະນະສະຫະພັນແມ່ຍິງຂັ້ນຕົນ.

## 6.7 ສູນສຸຂະພາບ ແລະ ພັດທະນາແມ່ຍິງ ໄວໜຸ່ມ ຍິງ - ຊາຍ:

## ມາດຕາ 01: ພາລະບົດບາດ , ໜ້າທີ່ ຂອງສູນສຸຂະພາບ ແລະ ພັດທະນາໄວໜຸ່ມ:

### ກ./ ພາລະບົດບາດ

1. ສຶກສາອົບຮົມການເມືອງແນວຄິດ, ໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ, ລະບຽບກົດ ໝາຍຂອງລັດ, ຮີດຄອງປະເພນີ, ມູນເຊື້ອວັດທະນະທຳອັນດີງາມຂອງຊາດ ໃຫ້ແກ່ໄວໜຸ່ມ ເພື່ອ ສ້າງໄວໜຸ່ມໃຫ້ກາຍເປັນພົນລະເມືອງດີຂອງຊາດ.

2. ເຕົ້າໂຮມຄວາມສາມັກຄີໄວໜຸ່ມ ເຄື່ອນໄຫວຈັດຕັ້ງປະຕິບັດກິດຈະກຳຕ່າງໆ ທີ່ເປັນປະໂຫຍດແກ່ ໄວ

ໜຸ່ມ ແລະ ຮ່ວມກັນເສີມສ້າງຄວາມສາມາດໄວໜຸ່ມ ກາຍເປັນຜູ້ທີ່ມີຄຸນສົມບັດດີ,ມີຄວາມ ຮູ້,ຄວາມ

ສາມາດເກັ່ງ, ຫຼີກເວັ້ນຈາກສິ່ງທີ່ບໍ່ດີ.

3. ໃຫ້ການບໍລິການຂໍ້ມູນຂ່າວສານທີ່ດີດ້ານສຸຂະພາບດ້ານຕ່າງໆ ແລະ ເສີມສ້າງທັກສະຊີວິດໃຫ້ແກ່ ແມ່ຍິງ ແລະໄວໜຸ່ມ.

4. ໃຫ້ການບໍລິການປິ່ນປົວ ແລະ ໃຫ້ຄໍາປຶກສາ ແບບເປັນມິດ ປິດລັບແກ່ໄວໜຸ່ມທາງດ້ານສຸຂະພາບຈະເລີນພັນ ແລະ ບໍລິການ ໃຫ້ຄໍາປຶກສາທາງໂທລະສັບສາຍດ່ວນ ໃຫ້ແກ່ແມ່ຍິງ ແລະ ໄວໜຸ່ມ.

## ຂ./ ໜ້າທີ່:

1. ມີໜ້າທີ່ສຶກສາອົບຮົມການເມືອງແນວຄິດ, ໂຄສະນາເຜີຍແຜ່ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ຮີດຄອງປະເພນີ, ມູນເຊື້ອວັດທະນະທໍາອັນດີງາມຂອງຊາດໃຫ້ແກ່ພະນັກງານ, ອາສາສະໝັກ ແລະໄວໜຸ່ມ ເພື່ອສ້າງໄວໜຸ່ມໃຫ້ກາຍເປັນພົນລະເມືອງດີ ຂອງປະເທດຊາດ.
2 ສ້າງໄວໜຸ່ມໃຫ້ກາຍເປັນອາສາສະໝັກທີ່ຫ້າວຫັນດີເດັ່ນ ເພື່ອເຂົ້າຮ່ວມໃນການເຄື່ອນໄຫວລົງຫາໄວ

   ໜຸ່ມ ຕາມໝູ່ບ້ານ ແລະ ສະຖານທີ່ຕ່າງໆຕາມຄວາມເໝາະສົມເພື່ອເຜີຍແຜ່ ສິ່ງເສີມຄວາມຮັບຮູ້ - ເຂົ້າໃຈກ່ຽວກັບຄວາມຮູ້ພື້ນຖານ ດ້ານສຸຂະພາບ ແລະ ແບບແຜນໃນການດໍາລົງຊີວິດ ທີ່ຖືກຕ້ອງຂອງໄວໜຸ່ມ. ເພື່ອສ້າງຄວາມສາມາດໃຫ້ໄວໜຸ່ມ ໄດ້ກາຍເປັນພົນລະເມືອງດີ ໃນສັງຄົມ ແລະ ຫ່າງໄກຈາກສິ່ງທີ່ບໍ່ດີ.
3. ໂຄສະນາສຸຂະສຶກສາ, ໃຫ້ຂໍ້ມູນຂ່າວສານ ດ້ານສຸຂະພາບ ແລະ ທັກສະຊີວິດ ໃຫ້ແກ່ແມ່ຍິງ ແລະ ໄວໜຸ່ມ.
4. ໃຫ້ການບໍລິການປິ່ນປົວ ແລະ ໃຫ້ຄໍາປຶກສາແບບເປັນມິດປິດລັບ ແກ່ແມ່ຍິງ ແລະ ໄວໜຸ່ມທາງດ້ານສຸຂະພາບຈະເລີນພັນ ແລະ ໃຫ້ຄໍາປຶກສາທາງດ້ານໂທລະສັບສາຍດ່ວນ ດ້ານສຸຂະພາບໃຫ້ແມ່ຍິງ ແລະ ໄວໜຸ່ມ.
5. ຄົ້ນຄວ້າຊອກຫາແຫຼ່ງທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອດໍາເນີນ ການປະຕິບັດແຜນຍຸດທະສາດ ຂອງສູນໃຫ້ປະກົດຜົນເປັນຈິງ ແລະ ສ້າງສູນໃຫ້ມີຄວາມຍືນຍົງ.
6. ມີໜ້າທີ່ຄົ້ນຄວ້າ ແລະ ປະສານສົມທົບກັບ ອົງການຈັດຕັ້ງຕ່າງໆ ທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຊອກຫາບົດຮຽນ ແລະທຶນຮອນມາດໍາເນີນກິດຈະກໍາຕ່າງໆ ທີ່ສູນໄດ້ວາງຄາດໝາຍໃນແຜນຍຸດທະສາດໃຫ້ມີຜົນສໍາເລັດ ພ້ອມນີ້ ກໍ່ບີນຕົວສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອສ້າງແຫຼ່ງລາຍຮັບ ໃຫ້ຕອບສະໜອງກັບຄວາມຕ້ອງການ ເຮັດໃຫ້ ການດໍາເນີນສູນມີຄວາມກ້າວໜ້າ ແລະ ຍືນຍົງ.
7. ມີໜ້າທີ່ດໍາເນີນກິດຈະກໍາຕ່າງໆ ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດຕາມພາລະບົດບາດ ສິດ, ໜ້າທີ່ ຂອງສູນສຸຂະພາບ.
8. ຕັ້ງໜ້າສຶກສາອົບຮົມ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ແກ່ພະນັກງານ ແລະ ອາສາສະໝັກໄວ

   ໜຸ່ມ ຂອງສູນໃຫ້ມີຄວາມຫ້າວຫັນຕໍ່ວຽກງານ, ມີຄວາມເສຍສະຫຼະ, ມີຄຸນສົມບັດ ເພື່ອຈັດຕັ້ງນໍາພາ ແລະ ຄຸ້ມຄອງບໍລິຫານສູນ ສ້າງໃຫ້ສູນມີຄວາມກ້າວໜ້າ ແລະ ເປັນທີ່ຮອງຮັບຂອງໄວໜຸ່ມກໍ່ຄືມະ

ທາຊົນ.

9. ຄຸ້ມຄອງທຶນຮອນ ແລະ ນໍາໃຊ້ໃຫ້ຖືກເປົ້າໝາຍ ຢ່າງມີປະສິດທິຜົນ, ມີການສະຫຼຸບລາຍງານ ລາຍຮັບ, ລາຍຈ່າຍປະຈໍາ 1ເດືອນ, 3 ເດືອນ, 6 ເດືອນ, 1 ປີ ແລະ ທ້າຍໂຄງການ ສົ່ງໃຫ້ຄະນະປະທານ ແລະ ເຈົ້າຂອງໂຄງການ ໃຫ້ຖືກຕ້ອງໃຫ້ທັນເວລາ.

- ຄຸ້ມຄອງ ແລະ ປົກປັກຮັກສາຊັບສົມບັດ, ພາຫານະທຸກຢ່າງ ທຸກຊະນິດ ຂອງສ່ວນລວມບໍ່ໃຫ້ຕົກເຮ່ຍເສຍຫາຍ, ຄຸ້ມຄອງ ແລະ ນໍາໃຊ້ວັດສະດຸ, ອຸປະກອນ, ພາຫານະ ທຸກຢ່າງໃຫ້ເປັນລະບົບແລະຈັດຕັ້ງປະຕິບັດໃຫ້ເຂັ້ມງວດ.

## ມາດຕາ 02 :ລະບອບວິທີເຮັດວຽກ

1. ປະຕິບັດລະບອບລວມສູນປະຊາທິປະໄຕ, ເຮັດວຽກເປັນໝູ່ຄະນະ, ແບ່ງງານ, ມອບໝາຍໜ້າທີ່ໃຫ້

ບຸກຄົນຮັບຜິດຊອບຢ່າງຈະແຈ້ງ , ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ປະຕິບັດຕາມມະຕິ, ເວົ້າ ແລະ ເຮັດຕາມມະຕິ, ບຸກຄົນປະຕິບັດຕາມການຈັດຕັ້ງ, ໃຫ້ກຽດ, ເຄົາລົບ ນັບຖືຫົວໜ້າ ແລະ ໝູ່ຄະນະ, ພະນັກງານ ແລະມະຫາຊົນ.

2. ເຊີດຊູສະຕິຕໍ່ການຈັດຕັ້ງ, ປະຕິບັດຂໍ້ກໍານົດ, ລະບຽບວິໄນກໍ່ຄືມະຕິຄໍາສັ່ງ, ຂໍ້ຕົກລົງຂອງການຈັດຕັ້ງ

ຢ່າງເຂັ້ມງວດ, ຕ້ານທັດສະນະອາດຍາສິດ ລະບອບໃນຕົວ ຫຼືບໍ່ປະຕິບັດ ຕາມມະຕິກອງປະຊຸມ, ເມື່ອໄດ້ຮັບ ການມອບໝາຍຈາກຄະນະເຂົ້າຮ່ວມກອງປະຊຸມ, ບັ້ນຝຶກອົບຮົມ, ໄປທັດສະນະສຶກສາ ແລະ ອື່ນໆ ພາຍຫຼັງສໍາເລັດແລ້ວຕ້ອງມີການເກັບກໍາສັງລວມລາຍງານຂໍທິດຊີ້ນໍາ ຈາກຄະນະສູນ ຄະນະປະທານສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ ເພື່ອຄົ້ນຄວ້າເປັນເອກະພາບຈັດຕັ້ງປະຕິບັດໃຫ້ເໝາະສົມ.

3. ການເຄື່ອນໄຫວວຽກງານເຖິງຈະແມ່ນໄລຍະສັ້ນ,ໄລຍະຍາວ ຕ້ອງມີແຜນການ, ໂຄງການຢ່າງລະອຽດ,ແຕ່ກ່ອນຈະວາງແຜນການຕ້ອງເກັບກໍາຂໍ້ມູນໃຫ້ລະອຽດຊັດເຈນ ໂດຍຕິດພັນກັບການສົ່ງເສີມບົດບາດ ຍິງ - ຊາຍມີການເຮັດທົດລອງ, ມີຈຸດສຸມ, ມີການຕິດຕາມ, ກວດກາຊຸກຍູ້ ຈັດຕັ້ງປະຕິບັດ ພ້ອມທັງສະຫຼຸບຖອດຖອນບົດຮຽນ ລາຍງານຂໍທິດຊີ້ນໍາຈາກຄະນະປະທານ ສຍ.ນວ ແລະເຈົ້າ

ຂອງໂຄງການ ຢ່າງເປັນປົກກະຕິ.

4. ການປະຕິບັດວຽກງານ ຕ້ອງໄປຄຽງຄູ່ ກັບການຍ້ອງຍໍ ໜ່ວຍງານ ຫຼືບຸກຄົນ ທີ່ມີຜົນງານດີເດັ່ນ ແລະມີການ ຕໍານິສົ່ງຂ່າວ ແລະ ປະຕິບັດວິໄນຜູ້ທີ່ເຮັດຜິດພາດຕາມສະຖານໜັກຫຼືເບົາ.

5. ການປະຕິບັດວຽກງານແຕ່ລະໄລຍະ ຕ້ອງມີການວາງແຜນງານ,ໂຄງການ ແລະ ຕ້ອງມີການປະສານ

ສົມທົບກັບພາກສ່ວນກ່ຽວຂ້ອງຢ່າງກົມກຽວ.

- ຢາກເຮັດໃຫ້ວຽກງານເດີນແມ່ນແລ່ນສະດວກ, ມີຜົນສຳເລັດທີ່ດີ ຄະນະ ແລະ ພະນັກງານແຕ່ລະຄົນຕ້ອງມີຄວາມເສຍສະຫຼະ, ມີຄວາມຮັບຜິດຊອບສູງ, ເປັນເຈົ້າການ, ມີຄວາມສາມັກຄີເປັນເອກະພາບ.

6. ການນຳໃຊ້ພະນັກງານຕ້ອງໃຫ້ແທດເໝາະກັບຄວາມຮູ້ ຄວາມສາມາດ, ພອນສະຫັວນ ພ້ອມນີ້ກໍ່ຖືເອົາການສົ່ງເສີມ ການຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ຄະນະ ແລະ ພະນັກງານ ເພື່ອສ້າງໃຫ້ພະນັກງານມີຄວາມຮູ້ ຄວາມສາມາດ ໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ແລະ ຂອດສຳຄັນຕົ້ນຕໍ ຄະນະ ແລະ ພະນັກງານ ຕ້ອງມີແຜນການລະອຽດ ໃນການເຄື່ອນໄຫວ.

7. ດຳເນີນລະບອບປະຊຸມ, ສຳຫຼວດກວດກາ, ສະຫຼຸບ ຕີລາຄາວຽກງານ, ຖອດຖອນບົດຮຽນ ແລະ ວາງ

ແຜນ ລາຍງານຂໍທິດຊີ້ນຳຈາກຄະນະປະທານ ໃຫ້ເປັນປົກກະຕິ ທັນເວລາ, ສຳລັບຄະນະ ແລະ ພະນັກງານຕ້ອງປະຊຸມກັນ 2 ອາທິດ ຕໍ່ 1 ຄັ້ງ, ສຳລັບ ຄະນະຮັບຜິດຊອບສູນ ປະຊຸມກັນອາທິດລະຄັ້ງ.

8. ການປະຕິບັດໂມງເວລາ ຂອງພະນັກງານ ຕ້ອງໄດ້ເອົາໃຈໃສ່ປະຕິບັດຕາມການຕົກລົງ ຂອງຄະນະປະທານ ສະຫະພັນແມ່ຍິງ.

### ມາດຕາ 03: ວ່າດ້ວຍການພົວພັນ ແລະ ການປະສານງານ

1. ສູນສຸຂະພາບ ແລະ ພັດທະນາໄວໜຸ່ມ ຢູ່ພາຍໃຕ້ການຊີ້ນຳໆພາໂດຍກົງ ຂອງຄະນະປະທານສະຫະພັນແມ່ຍິງນະຄອນຫຼວງວຽງຈັນ, ສ່ວນດ້ານວິຊາການ ສູນຈະມີການພົວພັນ ກັບພະແນກກ່ຽວຂ້ອງ ທີ່ພົວພັນເຖິງ ກິດຈະກຳຂອງໂຄງການ ໃນແຕ່ລະໄລຍະ.

2. ຄະນະຮັບຜິດຊອບສູນ ມີໜ້າທີ່ປະສານສົມທົບກັບຄະນະພັກ, ອຳນາດການປົກຄອງ, ບັນດາພະແນກການອ້ອມຂ້າງກໍ່ຄືອົງການຈັດຕັ້ງມະຫາຊົນ, ພົວພັນກັບບັນດາອົງການຈັດຕັ້ງສັງຄົມຕ່າງໆແລະ ບັນດາຊັ້ນຄົນ ຢູ່ພາຍໃນ ແລະ ຕ່າງປະເທດ ພາຍໃຕ້ການເຫັນດີຈາກຄະນະປະທານສະຫະພັນແມ່ຍິງນະຄອນຫຼວງເພື່ອຊອກທຶນຮອນແລະ ບົດຮຽນມາພັດທະນາ, ນຳພາການເຄື່ອນໄຫວ ວຽກງານຂອງສູນສຸຂະພາບ ແລະພັດທະນາໄວໜຸ່ມ ໃຫ້ມີຜົນສຳເລັດ ອັນຈົບງາມ.ສ່ວນການພົວພັນ ລາຍລະອຽດ ແມ່ນຕ້ອງເຄົາລົບລະບອບແບບແຜນວິທີເຮັດວຽກທີ່ໄດ້ວາງອອກ ໃນມາດຕາ 02.

3. ປະຕິບັດລະບອບລາຍງານສ່ອງແສງ ຕາມສາຍຕັ້ງ, ສາຍຂວາງ ຢ່າງຖືກຕ້ອງ , ທັນເວລາ ແລະ ປົກກະຕິ.

## 6.8. ສູນຝຶກອົບຮົມ ວິຊາຊີບ ຂອງສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ.

### ມາດຕາ 01: ພາລະບົດບາດ, ໜ້າທີ່ ຂອງສູນ ຝຶກອົບຮົມວິຊາຊີບ.

**ກ. ພາລະບົດບາດ:**

1. ພາລະບົດບາດຕົ້ນຕໍ ຂອງສູນແມ່ນ ຝຶກອົບຮົມວິຊາຊີບ ໃຫ້ແກ່ຜູ້ດ້ອຍໂອກາດ ທັງຍິງ ແລະ ຊາຍ ທີ່ອາໃສຢູ່ ໃນນະຄອນຫຼວງວຽງຈັນ, ສ້າງໃຫ້ເຂົາເຈົ້າ ມີຄວາມຮູ້ພື້ນຖານທາງດ້ານວິຊາຊີບໃດໜຶ່ງ, ເພື່ອຊ່ວຍໃຫ້ມີ ວຽກເຮັດງານທຳ, ສ້າງລາຍຮັບເພີ່ມໃຫ້ແກ່ຕົນເອງ ແລະ ຄອບຄົວປະກອບສ່ວນແກ້ໄຂຄວາມທຸກຈົນໃຫ້ໝົດໄປເທື່ອລະກ້າວ, ຕ້ານ ແລະ ສະກັດກັ້ນປະກົດ ການຫຍໍ້ທໍ້ໃນສັງຄົມໄດ້ສ່ວນໃດສ່ວນໜຶ່ງ.
2. ໄປຄຽງຄູ່ກັບການຝຶກອົບຮົມວິຊາຊີບແລ້ວ ຍັງມີບົດບາດສຶກສາອົບຮົມ ການເມືອງແນວຄິດ ໃຫ້ແກ່ພະນັກງານ, ຄູອາຈານ, ນັກຮຽນ (ຫຼືນັກຝຶກອົບຮົມ)ໃຫ້ເຊື່ອມຊຶມ,ກຳແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ຄຳຂວັນ 3 ດີ ຂອງສະຫະພັນແມ່ຍິງລາວ, ມູນເຊື້ອວັດທະນະທຳອັນດີງາມຂອງຊາດກໍ່ຄືຂອງສະຫະພັນແມ່ຍິງລາວ, ເພື່ອພ້ອມກັນປົກປັກຮັກສາ ແລະ ສົ່ງເສີມໃຫ້ດີຂຶ້ນ, ປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ ຢ່າງບໍ່ຢຸດຢັ້ງ.
3. ເຕົ້າໂຮມຄວາມສາມັກຄີພາຍໃນພະນັກງານແລະນັກຮຽນຢູ່ໃນສູນໃຫ້ແໜ້ນແຟ້ນເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

## ຂ./ ສິດໜ້າທີ່ ແລະ ຂອບເຂດຮັບຜິດຊອບ ຂອງສູນຝຶກອົບຮົມວິຊາຊີບ

1. ມີໜ້າທີ່ຈັດຕັ້ງ ດຳເນີນການຝຶກອົບຮົມ ວິຊາຊີບ ໃຫ້ຖືກຕ້ອງຕາມຈຸດປະສົງ ເປົ້າໝາຍ ຂອງໂຄງການ ໂດຍການເຫັນດີ ເປັນເອກະພາບ ຂອງຄະນະປະທານສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ.
2. ຝຶກອົບຮົມໃຫ້ໄດ້ຕາມລະດັບຄາດໝາຍ ຂອງແຜນຍຸດທະສາດ ຂອງສະຫະພັນແມ່ຍິງ ກຳນົດໄວ້.
3. ຄົ້ນຄວ້າ ຊອກຫາຫຼັກສູດ ໂຄງການ ແລະ ເອກະສານ ຕຳລາການສິດສອນວິຊາຕ່າງໆ ທີ່ກ່ຽວຂ້ອງ, ເພື່ອມານຳໃຊ້ເຂົ້າໃນການຝຶກອົບຮົມ ໃຫ້ປະກົດຜົນເປັນຈິງ.
4. ຄັດເລືອກເອົາຄູຝຶກ, ຜູ້ຊ່ວຍ ແລະ ພະນັກງານສັນຍາຈ້າງ ເຂົ້າມາເຮັດວຽກໃນໜ່ວຍງານຕ່າງໆຂອງສູນ, ໂດຍໄດ້ຮັບການເຫັນດີ ເປັນເອກະພາບ ຂອງຄະນະປະທານ ສະຫະພັນແມ່ຍິງນະຄອນຫຼວງວຽງຈັນ, ພ້ອມທັງຊີ້ນຳຄຸ້ມຄອງ ປະຕິບັດສັນຍາຢ່າງເຂັ້ມງວດ.
5. ປຸກລະດົມຂົນຂວາຍ ແລະ ຄັດເລືອກ ເອົານັກຮຽນເຂົ້າມາອົບຮົມ ໃຫ້ໄດ້ຕາມລະດັບຄາດໝາຍ ທີ່ກຳນົດໄວ້ຕາມຈຸດປະສົງ ແລະ ເປົ້າໝາຍ ຂອງສະຫະພັນແມ່ຍິງ ນະຄອນຫຼວງວາງອອກ.
6. ດຳເນີນການຝຶກອົບຮົມ ວິຊາຊີບຕ່າງໆ ຕາມກຳນົດເວລາ ແລະ ລະດັບຄາດໝາຍ ທີ່ກຳນົດໄວ້ຕາມແຜນການ ຂອງ ສຍນວ.
7. ຄຽງຄູ່ກັບການຮຽນຮູ້ ທາງດ້ານທິດສະດີແລ້ວ ສູນຍັງໄດ້ຈັດຕັ້ງ ໃຫ້ນັກຮຽນ ລົງຝຶກຫັດຕົວຈິງ ຢູ່ພື້ນຖານຕົ້ນ ຢ່າງໜ້ອຍ 3 - 4 ຄັ້ງ ຕໍ່ໜຶ່ງຊຸດ, ພ້ອມກັນນັ້ນ ກໍ່ຍັງໄດ້ສຸມໃສ່ການເຮັດຕົວຈິງໃຫ້ຫຼາຍ ສົມທົບກັບການເຮັດຕົວຈິງພາຍນອກ ໄປພ້ອມໆກັນ ເພື່ອສ້າງຄວາມຊຳນິຊຳນານ ໃຫ້ແກ່ນັກຮຽນ.

8. ນອກຈາກຮຽນຮູ້ວິຊາຊີບ ທີ່ກ່າວມາແລ້ວນັ້ນ ຜູ້ເຂົ້າອົບຮົມແຕ່ລະຊຸດຍັງໄດ້ຮຽນຮູ້ກ່ຽວກັບ ວິຊາການ
ຕະຫຼາດແລະ ການວາງແຜນເຮັດທຸລະກິດຂະໜາດນ້ອຍ ສໍາລັບຕົນເອງ ແລະ ຄອບຄົວ ທັກສະ ຊີວິດ ແລະ ຄວາມຮູ້ຮອບຕົວອື່ນໆ ອີກເຊັ່ນ: ຮຽນຮູ້ ແນວທາງນະໂຍບາຍຂອງພັກ, ລະບຽບ ກົດໝາຍ
ຂອງລັດທີ່ພົວພັນເຖິງແມ່ ຍິງ ແລະ ເດັກນ້ອຍ, ມາລະຍາດທາງສັງຄົມ, ເນື້ອໃນຄໍາຂັວນ 3 ດີ ຂອງ ແມ່ຍິງລາວ, ກົດລະບຽບສະເພາະຂອງສູນ ແລະ ອື່ນໆ ຕາມຄວາມເໝາະສົມ.
9. ຈັດຕັ້ງນໍາພາ ຄູ - ນັກຮຽນ ເຄື່ອນໄຫວຮັບໃຊ້ວຽກງານລວມ ຂອງສັງຄົມເຊັ່ນ: ເຂົ້າຮ່ວມພິທີສະເຫຼີມ ສະຫຼອງວັນສໍາຄັນຕ່າງໆຂອງຊາດ ກໍ່ຄືຂອງສະຫະພັນແມ່ຍິງ ສຶກສາອົບຮົມແນວຄິດຂອງເຂົາເຈົ້າ ໃຫ້ມີຄວາມຮັບຮູ້ ແລະເຂົ້າໃຈ ຕໍ່ສະພາບການບ້ານເມືອງ, ຕັ້ງໜ້າຝຶກຝົນຕົນເອງ ໃຫ້ກາຍເປັນຄົນ ຮູ້ຜູ້ດີ ມີຄວາມສາມາດ, ຈັດຕັ້ງ ການອອກແຮງງານລວມ ຝຶກແອບສົນລະປະວັນນະຄະດີ ສ້າງທັດ ສະນະ ແບບແຜນການດໍາລົງຊີວິດແບບແຜນລວມໝູ່ ແລະ ຄວາມຮູ້ ອື່ນໆ ອີກ.
10. ພາຍຫຼັງສິ້ນສຸດການຝຶກອົບຮົມແຕ່ລະຊຸດແລ້ວ, ຕ້ອງໄດ້ກວດກາ ຕີລາຄາ ສອບເສັງຄວາມຮັບຮູ້ ຂອງນັກຮຽນ, ສະຫຼຸບຜົນງານການເຄື່ອນໄຫວຕົວຈິງ ຊອກໃຫ້ເຫັນໄດ້ ຈຸດດີ - ຈຸດອ່ອນ ແລະ ບົດ ຮຽນ ທີ່ຖອດຖອນໄດ້ ພ້ອມທັງຈັດພິທີ ມອບໃບຢັ້ງຢືນ ໃຫ້ແກ່ ຜູ້ ທີ່ສໍາເລັດ ການຝຶກອົບຮົມ ໃນແຕ່ ລະຫຼັກສູດ.

## ມາດຕາ 7: ໂຄງປະກອບດ້ານບຸກຄະລາກອນ

7.1 ຄະນະບໍລິຫານງານ ສະຫະພັນແມ່ຍິງ ນະຄອນຫຼວງ ຈໍານວນ 15 - 31 ທ່ານ

7.2 ມີປະທານ 1 ທ່ານ, ຮອງ2 ທ່ານ, ໃນນີ້ ຮອງປະທານ 1 ທ່ານ ຮັບຜິດຊອບວຽກງານກວດກາ ໂດຍ ແມ່ນກອງປະຊຸມຄັ້ງປະຖົມມະລຶກ ຂອງຄະນະບໍລິຫານງານ ສະຫະພັນແມ່ຍິງ ຂັ້ນນະຄອນຫຼວງ ວຽງຈັນ ເປັນຜູ້ເລືອກຕັ້ງ. ມີກໍາມະການຄະນະບໍລິຫານງານຈໍານວນໜຶ່ງ ໂດຍໄດ້ຮັບການປ່ອນບັດ ເລືອກຕັ້ງຈາກກອງປະຊຸມໃຫຍ່ຜູ້ແທນແມ່ຍິງ ຂັ້ນນະຄອນຫຼວງວຽງຈັນ ເຊິ່ງໄດ້ຮັບການ ແຕ່ງຕັ້ງຈາກຄະນະ
ປະທານສະຫະພັນແມ່ຍິງ ຂັ້ນເທິງຖັດຕົນ.

7.3 ຫົວໜ້າ, ຮອງຫົວໜ້າຂະແໜງ ໄດ້ຮັບການແຕ່ງຕັ້ງ ຈາກປະທານສະຫະພັນແມ່ຍິງ ນະຄອນຫຼວງ ຕາມການເຫັນດີ ຂອງຄະນະຈັດຕັ້ງ ນະຄອນຫຼວງ.

7.4 ສະຫະພັນແມ່ຍິງນະຄອນຫຼວງວຽງຈັນ ຍັງປະກອບມີພະນັກງານ - ລັດຖະກອນ ຈໍານວນ 15 - 30 ຄົນ, ຢູ່ສູນສຸຂະພາບ ແລະ ພັດທະນາໄວໜຸ່ມຍິງ - ຊາຍຈໍານວນ 35 ຄົນ, ສູນຝຶກອົບຮົມວິຊາຊີບ 15 ຄົນ, ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ແລະ ການກໍານົດ ດ້ານຈໍານວນພົນ ຂອງ ນະຄອນຫຼວງ.

**ມາດຕາ 8: ໜ້າທີ່ຂອງປະທານ, ຮອງປະທານ ແລະ ກຳມະການໃນຄະນະບໍລິຫານງານ ສະຫະພັນແມ່ຍິງ ຂັ້ນ ນະຄອນຫຼວງວຽງຈັນ .**

8.1 ປະທານ ມີໜ້າທີ່ຊີ້ນຳລວມ ແລະ ລົງເລິກວຽກງານໃດໜຶ່ງ ທັງມີຄວາມຮັບຜິດຊອບໂດຍກົງ ຕໍ່ຄະນະພັກ, ອົງການປົກຄອງ ແລະ ສູນກາງສະຫະພັນແມ່ຍິງລາວ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຫະພັນແມ່ຍິງ ຂັ້ນນະຄອນຫຼວງ.

8.2 ຮອງປະທານ ເປັນຜູ້ຊ່ວຍປະທານ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຫະພັນແມ່ຍິງ ນະຄອນຫຼວງ ແລະ ລົງເລິກຮັບຜິດຊອບວຽກໃດວຽກໜຶ່ງຕາມການມອບໝາຍຂອງປະທານ ແລະ ຮັກສາການແທນປະທານໃນເວລາປະທານບໍ່ປະຈຳການ. ຄະນະບໍລິຫານງານແຕ່ລະສະຫາຍຮັບຜິດຊອບວຽກງານ ຕາມການມອບໝາຍຂອງຄະນະປະທານ.

## ໝວດທີ IV

## ວ່າດ້ວຍລະບອບວິທີເຮັດວຽກ.

**ມາດຕາ 9: ລະບອບວິທີເຮັດວຽກ.**

9.1 ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງລະອຽດຈະແຈ້ງ, ເສີມຂະຫຍາຍສິດເປັນເຈົ້າ ແລະ ຫົວຄິດປະດິດສ້າງຂອງພະນັກງານ, ສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງບັນດາເຜົ່າ, ບັນດາຊັ້ນຄົນ.

9.2 ເຮັດວຽກຢ່າງມີແຜນການ, ແຜນງານ, ໂຄງການ, ມີຈຸດສຸມ, ສ້າງຈຸດທົດລອງ, ມີການຊຸກຍູ້ຕິດຕາມ, ກວດກາແຕ່ລະໄລຍະ.

9.3 ປະສານສົມທົບກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ທີ່ພົວພັນເຖິງສິດ, ຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ ຕາມພາລະບົດບາດ, ໜ້າທີ່ຂອງຕົນ.

9.4 ດຳເນີນລະບອບປະຊຸມ, ສຳຫຼວດກວດກາ, ສະຫຼຸບຕີລາຄາວຽກງານ, ຖອດຖອນບົດຮຽນ, ລາຍງານ ຂໍຄຳເຫັນ ຈາກສາຍຕັ້ງ ແລະ ສາຍຂວາງ ເພື່ອແກ້ໄຂບັນຫາໃຫ້ທັນເວລາ.

9.5 ກອງປະຊຸມຄົບຄະນະບໍລິຫານງານ ສະຫະພັນແມ່ຍິງນະຄອນຫຼວງວຽງຈັນ ດຳເນີນ ປີລະ 1 ຄັ້ງ.

## ໝວດທີ V

## ບັນຍັດສຸດທ້າຍ

**ມາດຕາ 10:** ສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ ມີກາປະທັບຂອງຕົນເອງ ເພື່ອສະດວກໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 11:** ບັນດາອົງການຈັດຕັ້ງພັກ, ອົງການປົກຄອງ, ພະແນກການ, ອົງການຈັດຕັ້ງມະຫາຊົນຂອງ

ນະຄອນ ຫຼວງວຽງຈັນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດ ຂໍ້ກຳນົດ ສະບັບນີ້ຢ່າງຖືກຕ້ອງ.

**ມາດຕາ 12:** ຂໍ້ກຳນົດສະບັບນີ້ ປ່ຽນແທນຂໍ້ກຳນົດ ສະບັບເລກທີ 450/ສຍລ, ລົງວັນທີ 9/10/2007 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------------

ນະຄອນຫຼວງວຽງຈັນ

ສະຫະພັນແມ່ຍິງ ເລກທີ /ສຍນວ

ວັນທີ . . .

# ຂໍ້ກໍານົດ

# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ

# ຂອງສະຫະພັນແມ່ຍິງ ຂັ້ນຮາກຖານ (ພະແນກການ).

*************************

ອີງຕາມ ມະຕິຕົກລົງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ . . . . .ຄລສພ, ລົງວັນທີ . . . . . . . . . .. . . . . . . . .ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນກາງ ສະຫະພັນແມ່ຍິງລາວ.

ອີງຕາມ ກົດລະບຽບຂອງສະຫະພັນແມ່ຍິງ ລາວທີ່ໄດ້ຮັບຮອງເອົາໃນກອງປະຊຸມໃຫຍ່ ຜູ້ແທນ ແມ່ຍິງລາວ ທົ່ວປະເທດ ຄັ້ງທີ VI .

ອີງໃສ່ ຈຸດພິເສດ ແລະ ສະພາບຕົວຈິງ ຂອງນະຄອນຫຼວງວຽງຈັນ.

ອີງຕາມ ການຄົ້ນຄ້ວາ ຂອງ ຄະນະປະທານສະຫະພັນແມ່ຍິງ ນະຄອນຫວງວຽງຈັນ .

**ຄະນະປະທານ ສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ ເຫັນດີຕົກລົງ:**

## ໝວດທີ I

## ວ່າດ້ວຍທີ່ຕັ້ງ ແລະ ພາລະບົດບາດ

### ມາດຕາ 1: ທີ່ຕັ້ງ

1. ສະຫະພັນແມ່ຍິງຂັ້ນຮາກຖານ ແມ່ນອົງການຈັດຕັ້ງມະຫາຊົນໜຶ່ງ ຢູ່ ຂັ້ນຮາກຖານ, ເຄື່ອນໄຫວພາຍໃຕ້
   ການຊີ້ນໍາ - ນໍາພາໂດຍກົງ ຮອບດ້ານ ຂອງຄະນະພັກຮາກຖານ ແລະ ຄະນະພະແນກ ມີຖານະທຽບເທົ່າກັບອົງການຈັດຕັ້ງມະຫາຊົນ ຂັ້ນຮາກຖານ.

### ມາດຕາ 2: ພາລະບົດບາດ

1. ເປັນເສນາທິການໃຫ້ແກ່ຄະນະພັກ - ຄະນະພະແນກ ແລະ ສະຫະພັນແມ່ຍິງ ຂັ້ນນະຄອນຫຼວງວຽງຈັນ ກ່ຽວກັບການເຄື່ອນໄຫວວຽກງານຮອບດ້ານຂອງສະຫະພັນແມ່ຍິງ.
2. ເປັນຫົວໜ່ວຍຮາກຖານໜຶ່ງ ໃນການຈັດຕັ້ງປະຕິບັດທຸກໜ້າທີ່ວຽກງານຂອງຄະນະພັກ - ຄະນະພະແນກ ແລະ ແຜນພັດທະນາ ຂອງສະຫະພັນແມ່ຍິງລາວ.
3. ເປັນຕົວແທນໃນການປົກປ້ອງ ສິດ ແລະຜົນປະໂຫຍດ ອັນຊອບທຳ ຂອງແມ່ຍິງ ແລະ ເດັກນ້ອຍ.
4. ສຶກສາອົບຮົມການເມືອງ ແນວຄິດເຕົ້າໂຮມຄວາມສາມັກຄີ ແມ່ຍິງລາວບັນດາເຜົ່າ ພາຍໃນພະແນກໃຫ້ກວ້າງຂວາງ ແລະ ໜັກແໜ້ນ.
5. ປຸກລະດົມແມ່ຍິງພາຍໃນພະແນກ ອະນຸລັກ, ສົ່ງເສີມມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຂອງແມ່ຍິງລາວ, ນຳພາສະມາຊິກສະຫະພັນແມ່ຍິງ, ແມ່ຍິງບັນດາເຜົ່າເຂົ້າຮ່ວມທຸກການເຄື່ອນໄຫວຈັດຕັ້ງ
ປະຕິບັດແຜນພັດທະນາເສດຖະກິດ - ສັງຄົມ ຂອງພະແນກ ເພື່ອແກ້ໄຂຄວາມທຸກຍາກ ຂອງຄອບຄົວ ແລະຂອງບ້ານ.

ໝວດ ທີ II

ວ່າດ້ວຍໜ້າທີ່ ແລະ ຂອບເຂດສິດ

## ມາດຕາ 3: ໜ້າທີ່

1. ຈັດຕັ້ງເຊື່ອມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ - ສັງຄົມ ຂອງລັດ ໂດຍສະເພາະ ກົດໝາຍທີ່ພົວພັນການພັດທະນາ ແລະ ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ.
   - ປະສານສົມທົບກັບທຸກພາກສ່ວນໃນການຍົກລະດັບຄວາມຮູ້, ຄວາມສາມາດໃນທຸກດ້ານໃຫ້ແມ່ຍິງ, ປຸກ
   ລະດົມແມ່ຍິງເປັນເຈົ້າການພັດທະນາຕົນເອງ ແລະ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.
2. ເຕົ້າໂຮມຄວາມສາມັກຄີແມ່ຍິງບັນດາເຜົ່າ ບັນດາພະແນກການເພື່ອຊ່ວຍເຫຼືອເບິ່ງແຍງຊຶ່ງກັນ ແລະ ກັນ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ.
3. ນຳພາດຳເນີນຊີວິດ ຢູ່ຂັ້ນພະແນກຂອງຕົນ ຕິດຕາມ,ຊຸກຍູ້, ກວດກາການເຄື່ອນໄຫວ ປະຕິບັດໜ້າທີ່ຂອງສະມາຊິກ, ສະຫຼຸບຕີລາຄາວຽກງານ ແລະ ລາຍງານໃຫ້ສາຍຕັ້ງຂອງຕົນເປັນປົກກະຕິ.
4. ຄົ້ນຄ້ວາພິຈາລະນາຄຳສະເໜີຂອງແມ່ຍິງ, ເຂົ້າຮ່ວມນຳຄະນະພັກ - ອົງການປົກຄອງ ແລະ ພາກສ່ວນກ່ຽວຂ້ອງໃນການໄກ່ເກ່ຍ, ແກ້ໄຂບັນຫາຕ່າງໆ ທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ.

5. ປັບປຸງການຈັດຕັ້ງສະຫະພັນແມ່ຍິງ ຂັ້ນພະແນກຕົນໃຫ້ໜັກແໜ້ນເຂັ້ມແຂງ, ຂະຫຍາຍສະມາຊິກໃຫ້ກວ້າງຂວາງ, ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ

**ມາດຕາ 4: ຂອບເຂດສິດ**

1. ມີສິດເຂົ້າຮ່ວມການເຄື່ອນໄຫວວຽກງານ ນຳອົງການຈັດຕັ້ງ ພັກ-ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມອື່ນໆ ຕາມພາລະບົດບາດຂອງພະແນກຕົນເອງ.
2. ມີສິດເຂົ້າຮ່ວມຄົ້ນຄ້ວາ, ປະກອບຄຳເຫັນຕໍ່ການໄກ່ເກ່ຍ, ຕັດສິນບັນຫາ, ຊຸກຍູ້ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານ ຮອບດ້ານ ນຳຄະນະພັກ - ຄະນະພະແນກ.
3. ມີສິດສະເໜີ ຕໍ່ຄະນະພະແນກຂັ້ນຂອງຕົນ ເພື່ອຮັບເອົາສະມາຊິກ ຜູ້ທີ່ມີມາດຖານເງື່ອນໄຂຄົບຖ້ວນເຂົ້າ
   ເປັນສະມາຊິກພັກ ແລະ ບັນຈຸຊັບຊ້ອນເຂົ້າໃນຕຳແໜ່ງຂັ້ນຕ່າງໆ.
4. ມີສິດສະເໜີຕໍ່ຄະນະພະແນກຂັ້ນຂອງຕົນ ເພື່ອຮັບເອົາສະມາຊິກ ຜູ້ທີ່ມີມາດຖານເງື່ອນໄຂຄົບຖ້ວນເຂົ້າເປັນສະມາຊິກພັກ ແລະ ບັນຈຸຊັບຊ້ອນເຂົ້າໃນຕຳແໜ່ງຂັ້ນຕ່າງໆ.
5. ມີສິດໄດ້ຮັບຜົນປະໂຫຍດ ໃນດ້ານຕ່າງໆ ຕາມນະໂຍບາຍ ຂອງພັກ - ລັດ ກໍ່ຄືຂັ້ນພະແນກການຂອງຕົນເອງ.

## ໝວດທີ III
## ໂຄງປະກອບດ້ານບຸກຄະລາກອນ

**ມາດຕາ 5: ໂຄງປະກອບດ້ານບຸກຄະລາກອນ.**

ສະຫະພັນແມ່ຍິງ ຂັ້ນຮາກຖານພະແນກການປະກອບມີຄະນະສະຫະພັນແມ່ຍິງແຕ່3-5ຄົນ.

- ໃນນີ້ ມີປະທານ 1 ຄົນ.
- ຮອງປະທານ 1-2 ຄົນ.
- ມີຄະນະກຳມະການຈຳນວນໜຶ່ງໂດຍໄດ້ຮັບການປ່ອນບັດຄັດເລືອກຕັ້ງ ຈາກກອງປະຊຸມໃຫຍ່ສະຫະພັນແມ່ຍິງຂັ້ນພະແນກຂອງຕົນ ແລະ ໄດ້ຮັບການແຕ່ງຕັ້ງຈາກຄະນະປະທານສະຫະພັນແມ່ຍິງຂັ້ນເທິງຖັດຕົນ.

**ມາດຕາ 6: ໜ້າທີ່ ຂອງປະທານ, ຮອງປະທານ ແລະ ກຳມະການ**

1. ປະທານມີໜ້າທີ່ຮັບຜິດຊອບຊີ້ນໍາລວມ ແລະ ລົງເລິກວຽກງານໃດໜຶ່ງ, ທັງມີຄວາມຮັບຜິດຊອບໂດຍກົງຕໍ່ ຄະນະພັກ - ຄະນະພະແນກ ແລະ ສະຫະພັນແມ່ຍິງຂັ້ນເທິງຖັດຕົນ ກ່ຽວກັບການຈັດຕັ້ງ ແລະການເຄື່ອນໄຫວຂອງສະຫະພັນແມ່ຍິງຂັ້ນພະແນກ.
2. ຮອງປະທານ ເປັນຜູ້ຊ່ວຍປະທານໃນການຄຸ້ມຄອງຈັດຕັ້ງ ແລະ ລົງເລິກຮັບຜິດຊອບໂດຍກົງວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ ແລະ ມີສິດວ່າການແທນປະທານໃນເວລາບໍ່ຢູ່.
3. ປະທານສະຫະພັນແມ່ຍິງຂັ້ນຮາກຖານ ຕ້ອງແບ່ງງານໃຫ້ກໍາມະການໃນຄະນະແຕ່ລະສະຫາຍຮັບຜິດຊອບແຕ່ລະວຽກຕາມຄວາມເໝາະສົມ.

## ໝວດທີ IV
## ວ່າດວຍລະບອບວິທີເຮັດວຽກ

### ມາດຕາ 7: ລະບອບວິທີເຮັດວຽກ

ສະຫະພັນແມ່ຍິງຂັ້ນຮາກຖານ (ພະແນກການ) ເຄື່ອນໄຫວວຽກງານຕາມຫຼັກການດັ່ງນີ້ :

1. ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ປຶກສາຫາລືເປັນໝູ່ຄະນະ ແລະ ແບ່ງໜ້າທີ່ຮັບຜິດຊອບໃຫ້ກັນຢ່າງຈະແຈ້ງ.
2. ເຮັດວຽກຕ້ອງມີແຜນການແຕ່ລະໄລຍະ ເຊັ່ນ: ເດືອນ, ງວດ , ປີ, ການວາງແຜນການດັ່ງກ່າວ ຕ້ອງອີງໃສ່ແຜນການຂອງສະຫະພັນແມ່ຍິງ ຂັ້ນນະຄອນຫຼວງ , ແຜນການຂອງຄະນະພັກ - ຄະນະພະແນກ.
3. ການຈັດຕັ້ງປະຕິບັດແຜນການແຕ່ລະໄລຍະ ຕ້ອງມີການກວດກາສະຫຼຸບຖອດຖອນບົດຮຽນ ແລະລາຍງານໃຫ້ສະຫະພັນແມ່ຍິງ ນະຄອນຫຼວງ, ຄະນະພັກ - ຄະນະພະແນກ ປົກກະຕິ.
4. ມີການປະສານສົມທົບກັບການຈັດຕັ້ງ ແນວລາວສ້າງຊາດ ການຈັດຕັ້ງມະຫາຊົນ ແລະ ພາກສ່ວນຕ່າງໆເພື່ອເຄື່ອນໄຫວຈັດຕັ້ງປະຕິບັດແຜນພັດທະນາແມ່ຍິງ ຂັ້ນຮາກຖານ ໃຫ້ໄດ້ດີ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8:** ມອບໃຫ້ຄະນະສະຫະພັນແມ່ຍິງ ຂັ້ນ ຮາກຖານ(ພະແນກການ), ຫັນເປັນແຜນການລະອຽດໃນການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 9:** ຂໍ້ກໍານົດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຍຸດທະສາດການພັດທະນາແມ່ຍິງນະຄອນຫຼວງວຽງຈັນ ໄລຍະ 10 ປີ (2016-2025) ແລະ ວິໄສທັດຮອດປີ 2030.

## I. ສະພາບຂອງແມ່ຍິງນະຄອນຫຼວງວຽງຈັນ.

### 1. ສະພາບແວດລ້ອມທ່າແຮງບົ່ມຊ້ອນ ແລະ ຂໍ້ສະດວກ.

ນັບແຕ່ດຳເນີນການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ເປັນຕົ້ນມາ ນະຄອນຫຼວງວຽງຈັນ ແມ່ນມີສະຖຽນລະພາບທາງດ້ານການເມືອງ, ມີຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງໝັ້ນທ່ຽງ ບັນດາກົງຈັກການຈັດຕັ້ງໃນລະບົບການເມືອງໄດ້ຮັບການປັບປຸງ, ຄະນະພັກ ອົງການປົກຄອງນະຄອນຫຼວງວຽງຈັນໄດ້ສຸມໃສ່ພັດທະນານະຄອນຫຼວງວຽງຈັນ ໄດ້ກາຍເປັນທີ່ຕັ້ງ, ເປັນສູນກາງໃນການພັດທະນາ, ເປັນຈຸດສຸມໃນການພົວພັນ ແລະ ຮ່ວມມືຢ່າງຮອບດ້ານກັບບັນດາປະເທດໃນທົ່ວໂລກ ແລະ ພາກພື້ນໃນຍຸກສະໄໝ, ເປັນຈຸດທີ່ຕັ້ງຂອງອົງການ-ການນຳສູງສຸດພັກ-ລັດ ແລະ ອົງການຈັດຕັ້ງສາກົນຕ່າງໆ, ເປັນສູນກາງທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ເປັນຈຸດສູນກາງແຫ່ງອະລິຍະທຳທາງດ້ານປະຫວັດສາດ, ວັນນະຄະດີ, ຮີດຄອງປະເພນີ ແລະ ດຳລົງຊີວິດອັນເປັນເອກະລັກຂອງປວງຊົນໄດ້ຮັບການພັດທະນາເປັນໜ່ວຍໂຄສະນາເຜີຍແຜ່ວັດ ທະນະທຳຂອງປວງຊົນລາວ. ນະຄອນຫຼວງວຽງຈັນໄດ້ກາຍເປັນໃຈກາງແຫ່ງການພົວພັນດ້ານການຄ້າ, ການລົງທຶນເຊິ່ງເປັນພື້ນຖານໃຫ້ແກ່ການຂະຫຍາຍເສດຖະກິດ, ການຄ້າມີທ່າແຮງບົ່ມຊ້ອນຫຼາຍດ້ານທີ່ເປັນກຳລັງແຮງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ. ໃນໄລຍະ 2010-2014 ການເຕີບໂຕຂອງເສດຖະກິດມາຮອດປະຈຸບັນລວມຍອດຜະລິດຕະພັນບັນລຸ 12,7% ຫຼື ປະມານ 29,900 ຕື້ກີບ, ສະເລ່ຍລາຍຮັບຕໍ່ຫົວຄົນ 3,800 ໂດລາຕໍ່ຄົນຕໍ່ປີ, ທ່າອ່ຽງຂະຫຍາຍຕົວຂອງເສດຖະກິດໄດ້ປ່ຽນແປງຕາມກົນໄກເສດຖະກິດຕະຫຼາດ ແລະ ຫັນເປັນອຸດສາຫະກຳດ້ວຍອົງປະກອບ ເຊັ່ນ: ຂະແໜງກະສິກຳປ່າໄມ້ເພີ່ມຂຶ້ນ 9% ກວມເອົາ 16% ຂອງ GDP, ຂະແໜງອຸດສາຫະກຳເພີ່ມຂຶ້ນ 14% ກວມເອົາ 47% ຂອງ GDP, ຂະແໜງບໍລິການເພີ່ມຂຶ້ນ 12% ກວມເອົາ 37% ຂອງ GDP, ພື້ນຖານໂຄງລ່າງກໍໄດ້ຮັບການປັບປຸງກໍ່ສ້າງໃຫ້ມີຄວາມສະດວກດີຂຶ້ນເປັນຕົ້ນຖະໜົນຫົນທາງ, ໄຟຟ້າ, ນ້ຳປະ ປາ, ໂຮງໝໍ, ໂຮງຮຽນ ແລະ ການບໍລິການດ້ານສາທາລະນະສຸກກໍໄດ້ຮັບການແກ້ໄຂ, ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບກໍໄດ້ຖືກເອົາໃຈໃສ່ ແລະ ແກ້ໄຂປັບປຸງເຮັດໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມສະຫງົບເປັນພື້ນຖານ.

ໄປພ້ອມສະພາບຈຸດພິເສດພາຍໃນນະຄອນຫຼວງວຽງຈັນ ໃນເງື່ອນໄຂທີ່ປະເທດເຮົາເປີດກວ້າງຮ່ວມມືກັບສາກົນ, ການເຊື່ອມຍິງທາງດ້ານເສດຖະກິດ ເປັນຕົ້ນແມ່ນໃນການເຂົ້າເປັນສະມາຊິກຂອງອົງ

ກອນການຄ້າໂລກ ຫຼື WTO, ການເຂົ້າເປັນປະຊາຄົມເສດຖະກິດອາຊຽນໃນປີ 2015 ເປັນແຮງກົດດັນໃຫ້ ສປປ ລາວ ກໍຄືນະຄອນຫຼວງວຽງຈັນຕ້ອງຫັນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມເຂົ້າສູ່ລະບຽບ, ກົດໝາຍ, ສ້າງຄວາມຮັບຮູ້, ຄວາມເຂົ້າໃຈກ່ຽວກັບລະບຽບ, ກົດໝາຍຕ່າງໆໃຫ້ແກ່ປະຊາຊົນບັນດາ ເຜົ່າໂດຍສະເພາະແມ່ນແມ່ຍິງໃຫ້ເລິກເຊິ່ງເຖິງຖອງ ເພື່ອເປັນບ່ອນອີງໃນການຍາດແຍ່ງເອົາການລົງທຶນຈາກຕ່າງປະເທດ, ການຮ່ວມມືດ້ານຕ່າງໆຈາກຄູ່ຮ່ວມມືໃຫ້ໄດ້ຜົນປະໂຫຍດສູງສຸດ ທັງເປັນການດຶງດູດໃຫ້ນັກລົງທຶນຕ່າງປະເທດທີ່ມີຄວາມສາມາດ ແລະ ທຶນຮອນເຂົ້າມາທຳມາຄ້າຂາຍ ແລະ ລົງທຶນຢູ່ນະຄອນຫຼວງວຽງຈັນໃຫ້ຫຼາຍຂຶ້ນ ເປັນການກະຕຸກຊຸກຍູ້ການພັດທະນານະຄອນຫຼວງວຽງຈັນໃຫ້ຂະ ຫຍາຍຕົວຍິ່ງໆຂຶ້ນໄປ.

**2. ສະພາບຈຸດພິເສດແມ່ຍິງຢູ່ນະຄອນຫຼວງວຽງຈັນ.**

ນະຄອນຫຼວງວຽງຈັນມີພົນລະເມືອງເພດຍິງ 436,677 ຄົນ ເຊິ່ງແບ່ງຕາມເກນອາຍຸຄື: 0-4 ປີມີ 35,655 ຄົນ, 5-9 ປີ 38,443 ຄົນ, 10-14 ປີ 45,349 ຄົນ, 15-19 ປີ 60,234 ຄົນ, 40-44 ປີ 23,781 ຄົນ, 45-49 ປີ 18,400 ຄົນ, 50-54 ປີ 12,363 ຄົນ, 55-59 ປີ 9,320 ຄົນ, 60-64 ປີ 7,180 ຄົນ, 65-69 ປີ 6,374 ຄົນ, 70-74 ປີ 4,613 ຄົນ, 75 ປີຂຶ້ນໄປ 6,324 ຄົນ.

ແມ່ຍິງແບ່ງຕາມອາຊີບຄື:

ເປັນນັກຮຽນລ້ຽງເດັກອານຸບານ 15,090 ຄົນ, ນັກຮຽນປະຖົມ 34,154 ຄົນ, ນັກຮຽນມັດທະຍົມຕົ້ນ 24,870 ຄົນ, ນັກຮຽນມັດທະຍົມປາຍ 27,963 ຄົນ, ບໍ່ຮູ້ໜັງສື 1,063 ຄົນ.

ສະມາຊິກສະຫະພັນແມ່ຍິງ 62,039 ຄົນ, ເປັນລັດຖະກອນ 3,708 ຄົນ, ເປັນພະນັກງານລັດວິສະຫະກິດ 556 ຄົນ, ປ້ອງກັນຊາດປ້ອງກັນຄວາມສະຫງົບ 858 ຄົນ, ຊາວຄ້າຂາຍ 5,242 ຄົນ, ປະຊາຊົນຊາວໄຮ່ນາ 42,216 ຄົນ.

ລະດັບວິຊາສະເພາະ: ບໍ່ມີຊັ້ນ: 28,618 ຄົນ, ບຳລຸງ: 9,608 ຄົນ, ຊັ້ນຕົ້ນ: 3,142 ຄົນ, ຊັ້ນກາງ: 10,554 ຄົນ, ຊັ້ນສູງ: 7,892 ຄົນ, ປະລິນຍາຕີ: 3,155 ຄົນ, ປະລິນຍາໂທ: 69 ຄົນ, ປະລິນຍາເອກ: 1 ຄົນ.

ແມ່ຍິງເວົ້າລວມ, ເວົ້າສະເພາະແມ່ຍິງນະຄອນຫຼວງວຽງຈັນ ບໍ່ວ່າຍຸກໃດສະໄໝໃດກໍລ້ວນແຕ່ມີຄວາມອົດທົນ, ປະດິດສ້າງ ແລະ ດຸໝັ່ນຂະຫຍັນພຽນຈົນມີຄຳສຸພາສິດທີ່ວ່າ: “ຫຼັງສູ້ຟ້າ, ໜ້າສູ້ດິນ, ໄປຢຽບໝາມາຢຽບຂຽດ” ນອກຈາກການອອກແຮງງານເຮັດການຜະລິດແລ້ວຍັງມີມູນເຊື້ອໃນການຕຳຫູກທໍໄໝ ເຊິ່ງບູຮານເພິ່ນເວົ້າວ່າ: “ແມ່ຍິງນີ້ຂວັນມືເປັນລາຍ ງາຍມືເປັນດອກ” ນອກຈາກນັ້ນຍັງມີມູນເຊື້ອສາມັກຄີ, ຮັກເຊື້ອແພງຊາດ, ຮັກລູກແພງຜົວ, ມີຈິດໃຈໂອບເອື້ອອາລີ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ຮັກຫອມຕອມຕຸ້ມດ້ວຍຄວາມບໍລິສຸດຜຸດຜ່ອງໃນວົງສາຄະນາຍາດ ຍ້ອນແນວນັ້ນປະຊາຊົນລາວກໍຄືແມ່ຍິງພາສ້າງສາ, ບູລະນະ, ປົກປັກຮັກສາ ແລະ ເສີມຂະຫຍາຍຄວາມສາມັກຄີ ຈົນກາຍເປັນມູນເຊື້ອອັນດີງາມໃຫ້ປະຊາຊົນລາວທັງຊາດ. ໄປຄຽງຄູ່ປະຊາຊົນກໍຄືເອື້ອຍນ້ອງແມ່ຍິງຍັງມີມູນເຊື້ອຕໍ່ສູ້ພິລາດອາດຫານບໍ່ຍອມຈຳນົນ, ເດັດດ່ຽວໜຽວແໜ້ນ, ອົງອາດກ້າຫານອັນເຕັມໄປດ້ວຍການເສຍສະຫຼະຂອງ

ປະຊາຊົນກໍຄືແມ່ຍິງຜ່ານຫຼາຍຍຸກຫຼາຍສະໄໝ. ເປັນຕົ້ນ ສະໄໝຕໍ່ສູ້ປົດປ່ອຍຊາດ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວໃນເມື່ອກ່ອນ ກໍຄືການປະຕິບັດ 2 ໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປະຈຸບັນ.

ຄະນະພັກອົງການປົກຄອງນະຄອນຫຼວງວຽງຈັນ ຍາມໃດກໍໄດ້ເອົາໃຈໃສ່ຊີ້ນຳ-ນຳພາຢ່າງໃກ້ຊິດໃນການຊຸກຍູ້ສົ່ງເສີມຄວາມສະເໝີພາບຍິງ-ຊາຍ, ຊຸກຍູ້ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງນຳພາປະຕິບັດຄາດໝາຍສູ້ຊົນທີ່ກອງປະຊຸມໃຫຍ່ຂອງອົງຄະນະພັກວາງອອກ.

ເພື່ອປະຕິບັດໜ້າທີ່ການເມືອງ, ພາລະບົດບາດຂອງຕົນ ສະຫະພັນແມ່ຍິງນະຄອນຫຼວງວຽງຈັນໄດ້ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກນະຄອນຫຼວງວຽງຈັນ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງສູນກາງສະຫະພັນແມ່ຍິງລາວ ກໍຄືແຜນພັດທະນາແມ່ຍິງລາວມາເປັນ 6 ແຜນງານ 13 ໂຄງການ, ຄະນະສະຫະພັນແມ່ຍິງແຕ່ລະຂັ້ນໄດ້ນຳໄປຜັນຂະຫຍາຍແຜນງານໂຄງການລະອຽດສອດຄ່ອງກັບສະພາບເງື່ອນໄຂຕົວຈິງຂອງເມືອງ, ຫ້ອງການ, ພະແນກການອ້ອມຂ້າງນະຄອນຫຼວງວຽງຈັນ ພາຍໃຕ້ການຊີ້ນຳ-ນຳພາອຳນວຍຄວາມສະດວກຂອງຄະນະພັກແຕ່ລະຂັ້ນ ເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາແມ່ຍິງໄດ້ຮັບຜົນສຳເລັດຫຼາຍດ້ານສະແດງອອກດັ່ງລຸ່ມນີ້:

**ແຜນງານທີ I: ສຶກສາອົບຮົມ,ການເມືອງ-ແນວຄິດ ແລະ ຍົກລະດັບຄວາມຮູ້ທາງດ້ານກົດໝາຍໃຫ້ແກ່ແມ່ຍິງລວມມີ 3 ໂຄງການຄື:**

- **ໂຄງການທີ 1:** ໂຄສະນາສຶກສາອົບຮົມການເມືອງ- ແນວຄິດ ແລະ ຍົກລະດັບຄວາມຮູ້ດ້ານທິດສະດີການເມືອງ.
- **ໂຄງການທີ 2:** ຝຶກອົບຮົມຄວາມຮູ້ ດ້ານລັດຖະທຳມະນູນ, ລະບຽບກົດໝາຍ, ນິຕິກຳຕ່າງໆແລະສົນທິສັນຍາໃຫ້ແກ່ສະມາຊິກສະຫະພັນແມ່ຍິງແລະແມ່ຍິງບັນດາເຜົ່າ.
- **ໂຄງການທີ 3:** ປຸກລະດົມຊຸກຍູ້ຂະບວນການປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງແມ່ຍິງລາວ.

ຜ່ານການຈັດຕັ້ງປະຕິບັດບັນດາໂຄງການໃນແຜນງານດັ່ງກ່າວມີສະມາຊິກ ແລະ ແມ່ຍິງບັນດາເຜົ່າຈຳນວນ 70% ໄດ້ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດເຮັດໃຫ້ສະມາຊິກແມ່ຍິງ ແລະ ແມ່ຍິງບັນດາເຜົ່າໄດ້ຮັບຮູ້ເຂົ້າໃຈ ແລະ ມີຄວາມເປັນເອກະພາບແນວທາງນະໂຍບາຍຂອງພັກ, ຕົນຕົວປະຕິບັດ ແລະ ເຄົາລົບລະບຽບກົດໝາຍຂອງບ້ານເມືອງ, ຮັກສາໄດ້ຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວ, ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ຍົກລະດັບທາງດ້ານທິດສະດີການເມືອງ, ການປົກຄອງມີຈຳນວນເພີ່ມຂຶ້ນ. ການຈັດຕັ້ງປະຕິບັດ ເນື້ອໃນຂໍ້ແຂ່ງຂັນ 3 ດີ ສຳເລັດ ໄດ້ຕາມລະດັບຄາດໝາຍ%ປະຈຸບັນກຳລັງຂຽນປະຫວັດການເຄື່ອນໄຫວຂອງສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ.

**ໃນແຜນງານນີ້ສາມາດຕີລາຄາໄດ້ 85%**

**ແຜນງານທີ II: ສ້າງຄວາມເຂັ້ມແຂງໃຫ້ອົງການຈັດຕັ້ງ ສະຫະພັນແມ່ຍິງ ລວມມີ 2 ໂຄງການ:**

- **ໂຄງການທີ 1:** ປັບປຸງກົງຈັກການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງສະຫະພັນແມ່ຍິງ.
- **ໂຄງການທີ 2:** ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ແກ່ພະນັກງານ ສະຫະພັນແມ່ຍິງ.

ການຈັດຕັ້ງສະຫະພັນແມ່ຍິງແຕ່ລະຂັ້ນ ໄດ້ຮັບການປັບປຸງທາງດ້ານແບບແຜນວິທີເຮັດວຽກ ແລະ ແບບແຜນວິທີນຳພາໃນການເຄື່ອນໄຫວວຽກງານ, ສາມາດກາຍເປັນເສນາທິການທີ່ດີໃຫ້ແກ່ຄະນະພັກ ແລະ ອົງການປົກຄອງຂັ້ນຂອງຕົນໃນການເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມຂະບວນການແມ່ຍິງເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

- ການຈັດຕັ້ງສະຫະພັນແມ່ຍິງ ໄດ້ເອົາໃຈໃສ່ແບບແຜນວິທີການເຮັດວຽກ ແລະ ເອົາໃຈໃສ່ກໍ່ສ້າງສະມາຊິກ ແລະ ມະຫາຊົນ ເຮັດໃຫ້ການຈັດຕັ້ງສະຫະພັນແມ່ຍິງມີຄວາມເຕີບໃຫຍ່ຂະຫຍາຍຕົວ, ມີຄວາມເຂັ້ມແຂງທາງດ້ານປະລິມານ ແລະ ຄຸນນະພາບ ເປັນຕົ້ນໄດ້ເຜີຍແຜ່ກົດລະບຽບຂອງສະຫະພັນແມ່ຍິງລາວຕິດພັນກັບການຂະຫຍາຍສະມາຊິກແມ່ຍິງ. ໃນ 5 ປີຜ່ານມາ ສາມາດຂະຫຍາຍຮາກຖານສະຫະພັນແມ່ຍິງອ້ອມຂ້າງ ນະຄອນຫຼວງໄດ້ 2 ຮາກຖານ ແລະ 3 ໜ່ວຍ, ຮາກຖານອ້ອມຂ້າງເມືອງໄດ້ 20 ຮາກຖານ ແລະ 30 ໜ່ວຍ, ຂະຫຍາຍສະມາຊິກແມ່ຍິງໄດ້ 17.513 ສະຫາຍ. ປະຈຸບັນທົ່ວນະຄອນຫຼວງວຽງຈັນມີສະມາຊິກສະຫະພັນແມ່ຍິງທັງໝົດ: 62.039 ສະຫາຍ.

**ໃນແຜນງານນີ້ສາມາດຕີລາຄາໄດ້ 90%**

**ແຜນງານທີ III: ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ-ເດັກນ້ອຍ ແລະ ສົ່ງເສີມຄວາມສະເໝີພາບຍິງ-ຊາຍລວມ 3 ໂຄງການ.**

- **ໂຄງການທີ 1**: ໂຄສະນາເຜີຍແຜ່ຍົກລະດັບຄວາມຮູ້ກ່ຽວກັບການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ຕິດຕາມການຈັດຕັ້ງປະຕິບັດສົນທິສັນຍາຊີດໍ ແລະ ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ.
- **ໂຄງການທີ 2**: ການຈັດຕັ້ງ ການໃຫ້ຄຳປຶກສາແກ່ແມ່ຍິງ ກ່ຽວກັບສິດ ແລະ ຜົນປະໂຫຍດຂອງແມ່ຍິງ - ເດັກນ້ອຍ.
- **ໂຄງການທີ 3**: ໂຄງການສົ່ງເສີມສຸຂະພາບໃຫ້ແກ່ແມ່ຍິງ ແລະ ຄອບຄົວ.

ການຈັດຕັ້ງປະຕິບັດບັນດາໂຄງການໃນແຜນງານດັ່ງກ່າວສະຫະພັນແມ່ຍິງແຕ່ລະຂັ້ນໄດ້ເຮັດໜ້າທີ່ໃນການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ. ແມ່ຍິງບັນດາເຜົ່າໄດ້ເຂົ້າຮ່ວມເຊື່ອມຊຶມແນວທາງນະໂຍບາຍພັກ, ລະບຽບ, ກົດໝາຍຂອງລັດປະກອບຄຳຄິດຄຳເຫັນໃສ່ບັນດານະໂຍບາຍ, ຮ່າງກົດໝາຍ, ລະບຽບການ ແລະ ແຜນງານຂອງຂະແໜງການຕ່າງໆ ທີ່ກ່ຽວຂ້ອງກັບການພັດທະນາ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ ຜ່ານການເຊື່ອມຊຶມສະມາຊິກແມ່ຍິງ ແລະ ແມ່ຍິງບັນດາເຜົ່າສ່ວນຫຼາຍຍັງຮັກສາໄດ້ຄຸນທາດທາງດ້ານການເມືອງຢ່າງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ, ມີວິຊາຊີບ ແລະ ເປັນກຳລັງແຮງໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ. ຂະແໜງປົກປ້ອງສິດ

ຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ, ຈັດຕັ້ງ ແລະ ກວດກາຂອງສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນໄດ້ຮັບການແຕ່ງຕັ້ງ ແລະ ມີການຊຸບຊ້ອນບັນຈຸຫົວໜ້າ, ຮອງຫົວໜ້າຂະແໜງ ແລະ ວິຊາການເພື່ອເຮັດໜ້າທີ່ໃຫ້ຄໍາປຶກສາແກ່ແມ່ຍິງທີ່ມີບັນຫາໄດ້ 18.835 ຄັ້ງ.

ໜ່ວຍງານໃຫ້ຄໍາປຶກສາຢູ່ແຕ່ລະເມືອງໄດ້ຮັບການເຝິກອົບຮົມຍົກລະດັບຄວາມຮູ້, ຄວາມສາມາດເຮັດໜ້າທີ່ໃຫ້ຄໍາປຶກສາຊ່ວຍເຫຼືອແມ່ຍິງ ແລະ ເດັກນ້ອຍທີ່ມີບັນຫາ. ເອົາໃຈໃສ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການປົກປ້ອງ ແລະ ນໍາເອົາຜົນປະໂຫຍດອັນຊອບທໍາມາໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍ, ແກ້ໄຂໄກ່ເກ່ຍບັນຫາທີ່ເກີດຂຶ້ນເປັນຕົ້ນ: ການຢ່າຮ້າງ, ຂໍ້ຂັດແຍ່ງກ່ຽວກັບການລ້ຽງດູລູກ, ການແບ່ງປັນສິນສົມສ້າງ, ການຄ້າມະນຸດ, ໜີ້ສິນ ແລະ ບັນຫາອື່ນໆ ທີ່ເກີດຂຶ້ນໃນຄອບຄົວ ແລະ ສັງຄົມ.

**ໃນແຜນງານນີ້ສາມາດຕີລາໄດ້ 90%**

**ແຜນງານທີ IV: ສົ່ງເສີມການປະກອບອາຊີບ, ພັດທະນາສີມືແຮງງານ, ທຸລະກິດຂະໜາດນ້ອຍໃຫ້ແກ່ແມ່ຍິງ ເພື່ອຫຼຸດຜ່ອນຄວາມທຸກຍາກລວມມີ 3 ໂຄງການ.**

- **ໂຄງການທີ 1:** ສົ່ງເສີມຍົກລະດັບຄວາມຮູ້ວິຊາຊີບ, ພັດທະນາສີມືແຮງງານໃຫ້ແມ່ຍິງ ແລະ ປັບປຸງການຮຽນ-ການສອນກ່ຽວກັບວິຊາຊີບ.
- **ໂຄງການທີ 2:** ສ້າງຄວາມເຂັ້ມແຂງໃຫ້ຄະນະຮັບຜິດຊອບກອງທຶນພັດທະນາແມ່ຍິງ ແລະ ກຸ່ມທ້ອນເງິນ ສົ່ງເສີມທຸລະກິດຂະໜາດນ້ອຍ.
- **ໂຄງການທີ 3:** ກໍ່ສ້າງສູນຝຶກອົບຮົມວິຊາຊີບ ແລະ ສູນສຸຂະພາບ.

ກໍາລັງແຮງງານຢູ່ໃນຂະແໜງການກະສິກໍາ-ປ່າໄມ້ສ່ວນຫຼາຍແມ່ນເພດຍິງຊຶ່ງມີຫຼາຍຄົນ, ຫຼາຍຄອບຄົວໄດ້ກາຍເປັນຕົວແບບທາງດ້ານການຜະລິດດ້ານຕ່າງໆ ແມ່ຍິງບັນດາເຜົ່າໃນທົ່ວນະຄອນຫຼວງວຽງຈັນໄດ້ກາຍເປັນກໍາລັງແຮງປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມເປັນຕົ້ນ: ການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ໂດຍສະເພາະຄາດໝາຍລຶບລ້າງຄວາມທຸກຍາກ. ສະຫະພັນແມ່ຍິງນະຄອນຫຼວງວຽງຈັນ, ເມືອງ ໄດ້ນໍາພາຈັດຕັ້ງກອງທຶນຢູ່ຂັ້ນບ້ານ ແລະ ຂັ້ນຮາກຖານເພື່ອຊຸກຍູ້ການຜະລິດທາງດ້ານກະສິກໍາ, ຫັດຖະກໍາ, ການດໍາເນີນທຸລະກິດຂະໜາດນ້ອຍ, ການຊ່ວຍເຫຼືອໃນເວລາເຈັບເປັນ. ຜ່ານການຈັດຕັ້ງປະຕິບັດໃນໄລຍະຜ່ານມາໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງແມ່ຍິງນັບມື້ດີຂຶ້ນ, ເຮັດໃຫ້ຄອບຄົວຫຼຸດພົ້ນອອກຈາກຄວາມທຸກຍາກ ສະແດງອອກມີຫຼາຍຄອບຄົວສາມາດສ້າງລາຍຮັບໄດ້ແຕ່ 20-50 ລ້ານກີບຕໍ່ຄອບຄົວຕໍ່ປີ.

**ໃນແຜນງານນີ້ສາມາດຕີລາຄາໄດ້ 85%**

**ແຜນງານທີ V: ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທໍາອັນດີງາມຂອງຊາດ ແລະ ຂອງແມ່ຍິງລາວ ລວມມີ 1 ໂຄງການ.**

- **ໂຄງການທີ1:** ໂຄສະນາເຜີຍແຜ່ມູນເຊື້ອວັດທະນະທໍາອັນດີງາມຂອງຊາດ ແລະ ຂອງແມ່ຍິງລາວ.

ສະຫະພັນແມ່ຍິງແຕ່ລະຂັ້ນ ໄດ້ນໍາພາຈັດຕັ້ງການເຊື່ອມຊຶມເອກະສານຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວ ໃຫ້ແກ່ສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງບັນດາເຜົ່າເປັນປົກກະຕິເປັນຕົ້ນ: ຢູ່ສະຖາບັນການສຶກສາຂົງເຂດທຸລະກິດທັງພາກລັດ ແລະ ເອກະຊົນ, ຂັ້ນບ້ານ, ໜ່ວຍ ແລະ ຮາກຖານ ເພື່ອອະນຸລັກ ແລະ ສົ່ງເສີມສີໄມ້ລາຍມືໃນການຕໍາຫູກທໍໄໝທັງສົ່ງເສີມໃຫ້ແມ່ຍິງມີລາຍຮັບ ແລະ ຮັກສາໄດ້ເອກະລັກໃນການນຸ່ງຖືຂອງແມ່ຍິງ, ແມ່ຍິງຈໍານວນຫຼາຍໃນຊົນນະບົດ ແລະ ຕົວເມືອງໄດ້ຕັ້ງໜ້າຜະລິດຫັດຖະກໍາຕໍາຫູກ, ຕໍາຫູກທໍໄໝ, ຫັດຖະກໍາຈັກສານມີຫຼາຍບ້ານໄດ້ຖືກຮັບຮອງເປັນ 1 ບ້ານ 1 ຜະລິດຕະພັນ ເຊິ່ງເປັນການດຶງດູດທັງພາຍໃນ ແລະ ຕ່າງປະເທດມີຄວາມສົນໃຈຊົມໃຊ້ຜະລິດຕະພັນແຜ່ນແພຈາກສີໄມ້ລາຍມືຂອງແມ່ຍິງລາວບັນດາເຜົ່ານັບມື້ກ້ວາງຂວາງ. ສ້າງໃຫ້ເອື້ອຍນ້ອງແມ່ຍິງມີວຽກເຮັດງານທໍາ. ມີວິຊາຊີບ ແລະ ທັງເປັນການປະກອບສ່ວນອັນສໍາຄັນເຂົ້າໃນການອານຸລັກ, ສົ່ງເສີມມູນເຊື້ອວັດທະນະທໍາການນຸ່ງຖື, ຮີດຄອງປະເພນີອັນດີງາມຂອງຊາດກໍ່ຄືຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວບັນດາເຜົ່າ.

**ໃນແຜນງານນີ້ສາມາດຕີລາຄາໄດ້ 90%**

**ແຜນງານທີ VI: ການພົວພັນ ແລະ ຮ່ວມມືກັບຕ່າງປະເທດເພື່ອຍາດແຍ່ງບົດຮຽນທຶນຮອນມາຈັດຕັ້ງປະຕິບັດໂຄງການພັດທະນາແມ່ຍິງ ແລະ ຄອບຄົວ ລວມມີ 1 ໂຄງການ.**

- **ໂຄງການທີ 1:** ຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ແລະ ອົງການຈັດຕັ້ງສາກົນ.

ໄດ້ສືບຕໍ່ພົວພັນຮ່ວມມືກັບສະຫະພັນແມ່ຍິງນະຄອນຫຼວງຮ່າໂນ້ຍ, ໂຮ່ຈິມິນ ສສ ຫວຽດນາມ ຊຶ່ງມີການພົວພັນແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ໃນແຕ່ລະປີ. ພ້ອມນັ້ນໄດ້ເປັນເຈົ້າການປຸກລະດົມຍາດແຍ່ງການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນເພື່ອພັດທະນາ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທໍາໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍ. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານທີ່ໄດ້ຮັບການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນທີ່ຈັດຕັ້ງປະຕິບັດຢູ່ນະຄອນຫຼວງວຽງຈັນເປັນຕົ້ນ: ຈັດເຝິກອົບຮົມວິຊາຊີບ, ການລົງຊຸກຍູ້, ຕິດຕາມ, ການເຝິກອົບຮົມສົ່ງຂໍ້ມູນຄວາມຮູ້ດ້ານຕ່າງໆ ໃຫ້ແກ່ເອື້ອຍນ້ອງແມ່ຍິງຢູ່ບັນດາບ້ານໃນຂອບເຂດທົ່ວນະຄອນຫຼວງວຽງຈັນ.

**ໃນແຜນງານນີ້ສາມາດຕີລາຄາໄດ້ 90%**

❖ **ການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ ໄດ້ນໍາໃຊ້ງົບປະມານທັງໝົດ 518,000,000 ກີບ:**

- ໄດ້ຮັບງົບປະມານຈາກສູນກາງສະຫະພັນແມ່ຍິງລາວໃນແຕ່ລະປີຄື: ປີ 2011 (ບໍ່ໄດ້), ປີ 2012: 37.000.000 ກີບ; ປີ2013: 48.000.000 ກີບ ແລະ ປີ 2014: 38.000.000 ກີບ ລວມທັງໝົດ: 123,000,000 ກີບ. ໃນນີ້ແບ່ງໃຫ້ສະຫະພັນແມ່ຍິງ ນະຄອນຫຼວງ 35.000.000 ກີບ ແລະ ສະຫະພັນແມ່ຍິງເມືອງ 88.000.000 ກີບ.
- ສະຫະພັນແມ່ຍິງນະຄອນຫຼວງວຽງຈັນໄດ້ຮັບງົບປະມານຮ່ວງດັດສົມສົ່ງເສີມວິຊາການຈາກງົບປະມານຂອງລັດ ຈໍານວນ 395.000.000 ກີບ.

- **ຕີລາຄາຜົນສຳເລັດໃນການຈັດຕັ້ງປະຕິບັດ:**

**ກ. ດ້ານດີ:**

1. ແຜນພັດທະນາແມ່ຍິງນະຄອນຫຼວງວຽງຈັນ 5 ປີ(2010-2014) ໄດ້ຖືກຈັດຕັ້ງປະຕິບັດ ແລະ ມີຜົນສຳເລັດໃນຫຼາຍດ້ານ, ບັນດາຄາດໝາຍໄດ້ບັນລຸຕາມແຜນການ ແລະ ລື່ນແຜນທີ່ກຳນົດໄວ້.

2. ສະຫະພັນແມ່ຍິງແຕ່ລະຂັ້ນ ໄດ້ຫັນແຜນພັດທະນາ ສະຫະພັນແມ່ຍິງນະຄອນຫຼວງວຽງຈັນ ມາເປັນແຜນງານ, ໂຄງການລະອຽດ ແລະ ນຳພາສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງບັນດາເຜົ່າໃນຂອບເຂດຄວາມຮັບຜິດຊອບຂອງຕົນຈັດຕັ້ງປະຕິບັດໄດ້ຮັບໝາກຜົນເປັນຢ່າງດີ.

3. ສະມາຊິກແມ່ຍິງ ແລະ ແມ່ຍິງບັນດາເຜົ່າໄດ້ຮັບການພັດທະນາ, ໄດ້ຮັບການບຳລຸງຍົກລະດັບໃຫ້ມີຄວາມຮູ້, ຄວາມສາມາດ. ຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນຄອບຄົວ ແລະສັງຄົມໄດ້ຮັບການຍົກລະດັບ ແລະ ເພີ່ມຂຶ້ນໃນແຕ່ລະປີ.

4.ການຈັດຕັ້ງສະຫະພັນແມ່ຍິງ ໄດ້ຮັບການປັບປຸງ ແລະຂະຫຍາຍຕົວຕໍ່ເນື່ອງ, ບັນດາໂຄງການທີ່ກຳນົດໄວ້ໃນແຜນງານ ໄດ້ຖືກຈັດຕັ້ງປະຕິບັດຢ່າງມີຜົນສຳເລັດ, ບັນດາສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງບັນດາເຜົ່າ ໄດ້ພັດທະນາລະດັບຄວາມຮູ້ຄວາມສາມາດນຳໃຊ້ທ່າແຮງທີ່ບົ່ມຊ້ອນຂອງຕົນເຂົ້າໃນການຜະລິດເປັນສິນຄ້າ, ເຮັດໃຫ້ຊີວິດການເປັນຢູ່ຂອງເອື້ອຍນ້ອງແມ່ຍິງດີຂຶ້ນ, ຫຼາຍຄອບຄົວໄດ້ກາຍເປັນຕົວແບບທາງດ້ານການຜະລິດ-ທຸລະກິດ ແລະ ດ້ານອື່ນໆ ເພີ່ມຂຶ້ນ.

ສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງບັນດາເຜົ່າໃນທົ່ວນະຄອນຫຼວງວຽງຈັນ ໄດ້ຮັບການເອົາໃຈໃສ່ໃນການຍົກລະດັບຄວາມຮູ້-ຄວາມສາມາດ ທາງດ້ານທິດສະດີ ແລະ ວິຊາສະເພາະ, ໄດ້ຮັບການແຕ່ງຕັ້ງໃຫ້ມີບົດບາດໃນການຕັດສິນບັນຫາສຳຄັນຢູ່ຂັ້ນຕ່າງໆ ເພີ່ມຂຶ້ນ.

**ຂ. ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດ.**

ຄຽງຄູ່ກັບຜົນສຳເລັດໃນການຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການຕ່າງໆ ທີ່ກ່າວມາຂ້າງເທິງນັ້ນພວກເຮົາກໍ່ຍັງມີຈຸດອ່ອນຂໍ້ຄົງຄ້າງເຊັ່ນ:

1. ງົບປະມານທີ່ໃຊ້ເຂົ້າໃນການຈັດຕັ້ງປະຕິບັດບໍ່ພຽງພໍ, ມີບາງໂຄງການບໍ່ໄດ້ຖືກຈັດຕັ້ງປະຕິບັດ ເຊັ່ນ: ໂຄງການຈັດຕັ້ງປະກວດເຄື່ອງນຸ່ງຊົນເຜົ່າພາຍໃນນະຄອນຫຼວງວຽງຈັນ ໄດ້ປ່ຽນມາເປັນໂຄງການຂຽນປື້ມປະຫວັດການເຄື່ອນໄຫວຂອງອົງການຈັດຕັ້ງສະຫະພັນແມ່ຍິງນະຄອນຫຼວງວຽງຈັນ.

2. ຄວາມຮັບຮູ້ ແລະ ຄວາມສາມາດ ຂອງພະນັກງານສະມາຊິກແມ່ຍິງໃນການຈັດຕັ້ງປະຕິບັດໂຄງການຢູ່ແຕ່ລະຂັ້ນຈຳນວນໜຶ່ງຈຳກັດເຊັ່ນ: ໂຄງການເພີ່ມທະວີປະສິດທິພາບວຽກງານຂ່າວສານ-ຂອງແມ່ຍິງ, ໂຄງການສ້າງຄວາມເຂັ້ມແຂງໃຫ້ສະຫະພັນແມ່ຍິງແຕ່ລະຂັ້ນໃນການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ.

3. ການບຳລຸງຍົກລະດັບພະນັກງານເພດຍິງ, ແມ່ຍິງທີ່ເປັນການນຳຢູ່ຂັ້ນເມືອງ, ຂັ້ນບ້ານດ້ານການສຶກສາ ແລະ ວິຊາສະເພາະຍັງບໍ່ທັນໄດ້ດີເທົ່າທີ່ຄວນຈຶ່ງເຮັດໃຫ້ຄວາມສາມາດໃນການນຳພາບາງດ້ານ

ຍັງບໍ່ທັນແທດເໝາະເມື່ອທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານພ້ອມກັນນັ້ນການຕອບສະໜອງວັດຖຸອຸປະກອນເຂົ້າໃນການຈັດຕັ້ງປະຕິບັດແຜນງານໂຄງການຍັງເຮັດໄດ້ໜ້ອຍ.

4. ການສ້າງພະນັກງານສືບທອດປ່ຽນແທນຢູ່ແຕ່ລະຂັ້ນ ເພື່ອນຳພາວຽກງານສະຫະພັນແມ່ຍິງຍັງບໍ່ທັນມີເປົ້າໝາຍສ້າງເປັນລະບົບ ແລະ ຕໍ່ເນື່ອງ, ຂອດການປະສານງານ, ແບບແຜນວິທີເຮັດວຽກ ແລະ ມາດຕະການການຈັດຕັ້ງປະຕິບັດຂອງແມ່ຍິງບາງພາກສ່ວນ, ບາງເມືອງຍັງບໍ່ທັນເປັນອັນລະອຽດ ແລະ ບໍ່ທັນແທດເຖິງຕົວຈິງຢູ່ຂັ້ນໜ່ວຍ, ຮາກຖານ ແລະ ບ້ານ.

5. ການກວດກາ, ການຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດບໍ່ທັນເປັນປົກກະຕິ ແລະ ການກຳນົດຄວາມຮັບຜິດຊອບບໍ່ທັນລະອຽດຈະແຈ້ງເທົ່າທີ່ຄວນ.

ຄ. ບົດຮຽນທີ່ຖອດຖອນໄດ້:

1. ເພີ່ມທະວີຄວາມຮັບຜິດຊອບ ແລະ ບົດບາດການນຳພາໃນການຈັດຕັ້ງປະຕິບັດແຜນງານ, ໂຄງການທີ່ໄດ້ກຳນົດໄວ້ໃນແຜນພັດທະນາແມ່ຍິງນະຄອນຫຼວງວຽງຈັນ ແຕ່ລະໄລຍະຫັນເປັນແຜນງານໂຄງການເປັນກິດຈະກຳອັນລະອຽດ ແລະ ຜັນຂະຫຍາຍຈັດຕັ້ງປະຕິບັດຢ່າງຄົບຊຸດ ແລະ ຕິດພັນກັບຂະບວນການລົງຮາກຖານຕາມສາຍຕັ້ງຂອງຕົນ.

2. ຕ້ອງແບ່ງຄວາມຮັບຜິດຊອບລະອຽດລະຫວ່າງ ຄະນະບໍລິຫານງານສະຫະພັນແມ່ຍິງ ແລະ ສະຫະພັນແມ່ຍິງແຕ່ລະຂັ້ນ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ, ພ້ອມທັງຈັດລຽງບູລິມະສິດບັນດາແຜນງານ, ໂຄງການໃນການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

3. ການຊຸກຍູ້-ສົ່ງເສີມ, ຕິດຕາມ, ກວດກາ ໃນການຈັດຕັ້ງປະຕິບັດແຜນງານ, ໂຄງການຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງໃນແຕ່ລະໄລຍະໃຫ້ເປັນປົກກະຕິ.

4. ເອົາໃຈໃສ່ເຝິກອົບຮົມບຸກຄະລາກອນຂັ້ນນຳ ແລະ ພະນັກງານວິຊາການທີ່ເຮັດວຽກງານສະຫະພັນແມ່ຍິງໃຫ້ມີຄວາມຮູ້, ຄວາມສາມາດດ້ານການນຳພາ ແລະ ຄຸ້ມຄອງ, ທາງດ້ານເຕັກນິກວິຊາການຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ, ບົນພື້ນຖານການມີສ່ວນຮ່ວມຂອງເອື້ອຍນ້ອງແມ່ຍິງບັນດາເຜົ່າ ໃນການຈັດຕັ້ງປະຕິບັດແຜນງານ, ໂຄງການຢ່າງຕັ້ງໜ້າ.

## ພາກທີ II

## ທິດທາງຕໍ່ໜ້າ

ເພື່ອແກ້ໄຂບັນຫາທີ່ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ແລະ ສືບຕໍ່ການພັດທະນາປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ, ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ, ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານສະຫະພັນແມ່ຍິງ, ການພັດທະນາແມ່ຍິງໃນຕໍ່ໜ້າສອດຄ່ອງກັບແຜນພັດທະນາແມ່ຍິງລາວ, ແຜນພັດທະນາເສດຖະກິດ-ສັງຄົມຂອງນະຄອນຫຼວງວຽງຈັນ ທັງເປັນການປະກອບສ່ວນເຂົ້າໃນການສ້າງນະຄອນຫຼວງວຽງຈັນໃຫ້ເປັນເມືອງໜ້າຢູ່. ສະຫະພັນແມ່ຍິງນະ ຄອນຫຼວງວຽງຈັນ ໄດ້ກຳນົດວິໄສທັດຮອດປີ 2030, ແຜນຍຸດທະສາດຮອດປີ 2025, ແຜນພັດທະ ນາແມ່ຍິງ ປີ 2016-2020 ມີດັ່ງນີ້:

## II. ວິໄສທັດປີ 2030.

ສ້າງໃຫ້ສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງລາວບັນດາເຜົ່າທົ່ວນະຄອນຫຼວງວຽງຈັນ:

1. ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສົມທໍາປະຕິວັດ, ມີຄວາມສີວິໄລທາງດ້ານຈິດໃຈ, ມີຄວາມຮັບຮູ້ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ລັດຖະທໍາມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດຂອງນະຄອນຫຼວງວຽງຈັນ, ແມ່ຍິງນະຄອນຫຼວງວຽງຈັນມີສະຕິຕື່ນຕົວທາງດ້ານກົດໝາຍຫຼາຍຂຶ້ນ.

2. ແມ່ຍິງໄດ້ຮັບການພັດທະນາທາງດ້ານແນວຄິດຈິດໃຈ, ການສຶກສາ, ສຸຂະພາບ ແລະ ວິຊາຊີບຢ່າງທົ່ວເຖິງ.

3. ແມ່ຍິງ ແລະ ເດັກນ້ອຍໄດ້ຮັບການບໍລິການທາງດ້ານມີສຸຂະພາບແຂງແຮງ, ອັດຕາການເຈັບເປັນ, ການຕາຍລຸດລົງ, ອາຍຸຍືນສະເລ່ຍເພີ່ມຂຶ້ນ.

4. ແມ່ຍິງມີວິຊາຊີບ, ມີສີມືແຮງງານ, ມີວຽກເຮັດງານທໍາ ມີລາຍຮັບເປັນກໍາລັງແຮງໃນການສ້າງເສດຖະກິດຄອບຄົວ, ການຜະລິດເປັນສິນຄາ້, ການດໍາເນີນທຸລະກິດ ມີບົດບາດໃນການຄຸ້ມຄອງເສດຖະກິດ, ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມນະຄອນຫຼວງວຽງຈັນ.

5. ແມ່ຍິງມີບົດບາດໃນການອະນຸລັກ ແລະ ສົ່ງເສີມວັດທະນະທໍາອັນດີງາມຂອງຊາດລາວ, ເສີມຂະຫຍາຍຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວ.

6. ແມ່ຍິງມີຄຸນທາດການເມືອງໜັກແໜ້ນ, ມີຄວາມຮູ້ຄວາມສາມາດເຂົ້າໃນການນໍາພາ-ຄຸ້ມຄອງເພີ່ມຂຶ້ນ.

7. ຄວາມສະເໝີພາບຍິງ-ຊາຍຢູ່ໃນຄອບຄົວ, ສັງຄົມໄດ້ຮັບການຈັດຕັ້ງປະຕິບັດຢ່າງກວ້າງຂວາງ.

8. ແມ່ຍິງໄດ້ເຂົ້າເຖິງ ແລະ ຮູ້ນໍາໃຊ້ຂໍ້ມູນຂ່າວສານທີ່ເປັນປະໂຫຍດເພື່ອພັດທະນາຕົນເອງ, ຄອບຄົວ ແລະ ສັງຄົມ.

9. ການຈັດຕັ້ງສະຫະພັນແມ່ຍິງທຸກຂັ້ນໄດ້ຮັບການຂະຫຍາຍຕົວຢ່າງທົ່ວເຖິງ, ມີຄວາມໜັກແໜ້ນເຂັ້ມແຂງ, ເປັນຕົວແທນໃນການປົກປ້ອງສິດຜົນປະໂຫຍດອັນຊອບທໍາຂອງແມ່ຍິງ ແລະ ເດັກນ້ອຍ.

10. ການຈັດຕັ້ງສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ, ເມືອງ ມີການພົວພັນ ແລະ ຮ່ວມມືກັບແມ່ຍິງບັນດາປະເທດເພື່ອນມິດ, ພາກພື້ນ ແລະ ສາກົນ ສາມາດນໍາໃຊ້ກາລະໂອກາດຈາກການພົວພັນຮ່ວມມືຢ່າງມີປະສິດທິຜົນ, ເພື່ອຜົນປະໂຫຍດອັນຊອບທໍາຂອງແມ່ຍິງນະຄອນຫຼວງວຽງຈັນ.

## III. ຍຸດທະສາດການພັດທະນາແມ່ຍິງນະຄອນຫຼວງວຽງຈັນໄລຍະ 10 ປີ (2016-2025).

ຍຸດທະສາດການພັດທະນາແມ່ຍິງນະຄອນຫຼວງວຽງຈັນ 10 ປີ ແມ່ນເພື່ອປະກອບສ່ວນອັນສໍາຄັນເຂົ້າໃນການປະກອບສ້າງນະຄອນຫຼວງວຽງຈັນໃຫ້ເປັນເມືອງໜ້າຢູ່, ບັນລຸແຜນພັດທະນາແມ່ຍິງລາວທີ່ສູນກາງສະຫະພັນແມ່ຍິງລາວວາງອອກ. ສືບຕໍ່ສ້າງພື້ນຖານໜັກແໜ້ນໃຫ້ແກ່ອົງການຈັດຕັ້ງສະຫະພັນແມ່ຍິງກາຍເປັນກໍາລັງແຮງໃນການປະກອບສ່ວນປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ

ຂອງຊາດກໍ່ຄືຂອງນະຄອນຫຼວງວຽງຈັນທີ່ໄດ້ກຳນົດໄວ້. ສະຫະພັນແມ່ຍິງນະຄອນຫຼວງວຽງຈັນ ກຳນົດທິດທາງລວມ, ຄາດໝາຍສູ້ຊົນ ແລະ ຍຸດທະສາດທີ່ເປັນບູລິມະສິດດັ່ງນີ້:

1. **ຈຸດໝາຍລວມ:**

- ສ້າງໃຫ້ສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງບັນດາເຜົ່າທົ່ວນະຄອນຫຼວງວຽງຈັນ ເປັນພົນລະເມືອງດີ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຢຶດໝັ້ນໃນອຸດົມຄະຕິສັງຄົມນິຍົມ, ມີຄຸນສົມບັດສິນທຳປະຕິວັດຊື່ສັດບໍລິສຸດ, ມີຄວາມສີວິໄລດ້ານຈິດໃຈ, ມີຄວາມສາມັກຄີເອື້ອເຟື້ອເພື່ອແຜ່, ມີສະຕິເຄົາລົບ ແລະ ປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍ, ມີລະບຽບວິໄນ ແລະ ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ.

- ມີລະດັບການສຶກສາ, ມີລະດັບຄວາມຮູ້ດ້ານວິຊາການ, ວິຊາຊີບທີ່ສາມາດສ້າງວຽກເຮັດງານທຳທີ່ມີລາຍຮັບປົກກະຕິໃຫ້ຕົນເອງ ແລະ ຄອບຄົວ.

- ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ເຂົ້າເຖິງຂໍ້ມູນຂ່າວສານທີ່ຖືກຕ້ອງ ແລະ ຮູ້ນຳໃຊ້ເຕັກນິກວິທະຍາສາດທີ່ທັນສະໄໝເຂົ້າໃນການປະຕິບັດໜ້າທີ່ວຽກງານ ແລະ ພັດທະນາຄຸນນະພາບຊີວິດຕົນເອງ ແລະ ຄອບຄົວໃຫ້ດີຂຶ້ນ.

- ແມ່ຍິງໄດ້ຮັບຮູ້ ແລະ ໄດ້ຮັບການບໍລິການດ້ານກົດໝາຍສູງຂຶ້ນ.

- ແມ່ຍິງໄດ້ຮັບການບໍລິການດ້ານສາທາລະນະສຸກທົ່ວເຖິງ ເພື່ອໃຫ້ມີສຸຂະພາບແຂງແຮງຂຶ້ນ, ອາຍຸຍືນສະເລ່ຍເພີ່ມຂຶ້ນ.

- ອະນຸລັກ ແລະ ສົ່ງເສີມວັດທະນະທຳອັນດີງາມຂອງຊາດ ແລະ ຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວບັນດາເຜົ່າ.

- ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ຢູ່ໃນຄອບຄົວ ແລະ ສັງຄົມ, ຄອບຄົວມີຄວາມຜາສຸກ, ແມ່ຍິງມີໂອກາດເຂົ້າຮ່ວມຢູ່ໃນການນຳພາ-ຄຸ້ມຄອງທຸກຂັ້ນ.

- ການຈັດຕັ້ງສະຫະພັນແມ່ຍິງທຸກຂັ້ນມີຄວາມໜັກແໜ້ນເຂັ້ມແຂງ ສາມາດເປັນຕົວແທນໃນການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ.

**2. ຄາດໝາຍສູ້ຊົນ.**

- ແຕ່ນີ້ຫາປີ 2025 ສະມາຊິກສະຫະພັນແມ່ຍິງໄດ້ຄົ້ນຄ້ວາເຊື່ອມຊຶມບັນດານິຕິກຳ, ກົດໝາຍທີ່ພົວພັນເຖິງການພັດທະນາ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ກວມເອົາ 95% ຂອງຈຳນວນສະມາຊິກ ແລະ ເອື້ອຍນ້ອງແມ່ຍິງບັນດາເຜົ່າກວມເອົາ 70% ຂຶ້ນໄປ.

- ຈຳນວນລັດຖະກອນເພດຍິງໃຫ້ກວມ 45 % ຂຶ້ນໄປ.

- ຊຸກຍູ້ສົ່ງເສີມໃຫ້ແມ່ຍິງໄດ້ຮັບການພັດທະນາໃນທຸກດ້ານ, ແມ່ຍິງໄດ້ມີວຽກເຮັດງານທຳ.

- ສົ່ງເສີມໃຫ້ແມ່ຍິງໄດ້ເຂົ້າເຖິງຂໍ້ມູນຂ່າວສານທີ່ເປັນປະໂຫຍດໃນການພັດທະນາແມ່ຍິງ ແລະ ຄອບຄົວກວມເອົາ 70% ຂຶ້ນໄປ.

- ຊຸກຍູ້ໃຫ້ແມ່ຍິງໄດ້ເຂົ້າເຖິງຂໍ້ມູນຂ່າວສານ ແລະ ໄດ້ຮັບການບໍລິການດ້ານສຸຂະພາບຢ່າງທົ່ວເຖິງ, ອັດຕາການຕາຍຂອງແມ່ລຸດລົງ...ແລະ ອັດຕາການຕາຍຂອງເດັກລຸດລົງ...

- ສະມາຊິກສະຫະພັນແມ່ຍິງສ້າງຄອບຄົວດີມີຄວາມຜາສຸກກວມເອົາ 90% ຂອງຈຳນວນຄອບຄົວສະມາຊິກສະຫະພັນແມ່ຍິງທັງໝົດ.

- ຊຸກຍູ້ສົ່ງເສີມສ້າງເງື່ອນໄຂໃຫ້ແມ່ຍິງໄດ້ເຂົ້າຮ່ວມໃນຕຳແໜ່ງນຳພາ ແລະ ຄຸ້ມຄອງໃນຂັ້ນຕ່າງໆ

- ສະມາຊິກສະພາ ກວມເອົາ 30%.

- ການນຳຂັ້ນນະຄອນຫຼວງ ກວມເອົາ 30%.

- ການນຳຂັ້ນເມືອງ ກວມເອົາ 30%.

- ການນຳຂັ້ນບ້ານ ກວມເອົາ 25%.

**3. ທິດທາງຍຸດທະສາດພັດທະນາແມ່ຍິງຮອດປີ 2025.**

- ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ຮັບການພັດທະນາທາງດ້ານແນວຄິດຈິດໃຈ, ສຸຂະພາບ, ການສຶກສາ, ວິຊາຊີບ ແລະ ສີມືແຮງງານ.

- ນຳພາ, ຊຸກຍູ້, ສົ່ງເສີມການຈັດຕັ້ງຜັນຂະຫຍາຍແນວທາງຂອງພັກ-ລັດຖະບານ, ສົນທິສັນຍາສາກົນໃນການພັດທະນາ, ການປົກປ້ອງສິດຜົນປະໂຫຍດແມ່ຍິງ ແລະ ເດັກນ້ອຍ, ການປະຕິບັດສິດສະເໝີພາບລະຫວ່າງຍິງ-ຊາຍ, ຄວາມກ້າວໜ້າຂອງແມ່ຍິງ, ມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກນະຄອນຫຼວງວຽງຈັນ, ແຜນພັດທະນາເສດຖະກິດ-ສັງຄົມນະຄອນຫຼວງວຽງຈັນ, ແຜນພັດທະນາແມ່ຍິງລາວ.

- ຊຸກຍູ້, ສົ່ງເສີມ ແລະ ປະສານສົມທົບກັບທຸກພາກສ່ວນເພື່ອສ້າງເງື່ອນໄຂໃຫ້ແມ່ຍິງໄດ້ຮັບການພັດທະນາໃນທຸກດ້ານ, ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຮູ້, ຄວາມສາມາດເຂົ້າຮ່ວມໃນຕຳແໜ່ງນຳພາຄຸ້ມຄອງຂັ້ນຕ່າງໆເພີ່ມຂຶ້ນ.

- ປັບປຸງ ແລະ ຂະຫຍາຍການຈັດຕັ້ງສະຫະພັນແມ່ຍິງທຸກຂັ້ນທົ່ວນະຄອນຫຼວງວຽງຈັນໃຫ້ໜັກແໜ້ນເຂັ້ມແຂງ.

- ສ້າງຄວາມຮັບຮູ້, ເຂົ້າໃຈດ້ານກົດໝາຍໃຫ້ແກ່ແມ່ຍິງ ແລະ ຊຸກຍູ້ສົ່ງເສີມແມ່ຍິງ ໄດ້ເຂົ້າເຖິງຂະບວນຍຸຕິທຳຢ່າງທົ່ວເຖິງ.

- ອະນຸລັກ, ສົ່ງເສີມມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຂອງແມ່ຍິງ ແລະ ຄຸນລັກສະນະທີ່ປັນມູນເຊື້ອຂອງແມ່ຍິງລາວບັນດາເຜົ່າໃຫ້ຄົງຢູ່ຄູ່ຊາດລາວ.

- ຊຸກຍູ້, ສົ່ງເສີມການຜະລິດເປັນສິນຄ້າ.

- ສົ່ງເສີມບົດບາດຂອງແມ່ຍິງໃນການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຍືນຍົງ.

- ປຸກລະດົມແມ່ຍິງເຂົ້າຮ່ວມປະຕິບັດຂໍ້ແຂ່ງຂັນ 3 ດີ ສະຫະພັນແມ່ຍິງຕິດພັນກັບຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ, ການສ້າງບ້ານກຸ່ມບ້ານພັດທະນາ, ການສ້າງນະຄອນຫຼວງວຽງຈັນໃຫ້ກາຍເປັນເມືອງໜ້າຢູ່.

- ເສີມຂະຫຍາຍການພົວພັນຮ່ວມມືກັບອົງການຈັດຕັ້ງແມ່ຍິງບັນດາປະເທດເພື່ອນມິດ ຍຸດທະສາດປະເທດເພື່ອນມິດ, ປະເທດອາຊຽນ ແລະ ອົງການຈັດຕັ້ງສາກົນຕາມແນວທາງນະໂຍບາຍການຕ່າງປະເທດຂອງພັກ ແລະ ລັດຖະບານ.

**4. ມາດຕະການຈັດຕັ້ງປະຕິບັດ.**

- ສະຫະພັນແມ່ຍິງຂັ້ນເມືອງ, ພະແນກການ ເປັນເຈົ້າການນຳສະເໜີຕໍ່ຄະນະພັກ-ອົງການປົກຄອງ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການຈັດຕັ້ງຜັນຂະຫຍາຍຍຸດທະສາດພັດທະນາແມ່ຍິງນະຄອນຫຼວງເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງຂະແໜງການ ແລະ ທ້ອງຖິ່ນ.

- ສະຫະພັນແມ່ຍິງທຸກຂັ້ນເອົາໃຈໃສ່ຈັດຕັ້ງເຊື່ອມຊຶມຜັນຂະຫຍາຍເປັນແຜນງານ, ໂຄງການລະອຽດນຳພາຈັດຕັ້ງປະຕິບັດໃນແຕ່ລະໄລຍະ ພ້ອມທັງສະຫຼຸບລາຍງານຕາມສາຍຕັ້ງສາຍຂວາງຢ່າງເປັນປົກກະຕິ.

- ສະຫະພັນແມ່ຍິງທຸກຂັ້ນເປັນເຈົ້າການຂຸດຄົ້ນ ແລະ ນຳໃຊ້ທ່າແຮງຂອງທ້ອງຖິ່ນ ແລະ ປຸກລະດົມນຳໃຊ້ແຫຼ່ງທຶນຈາກການຈັດຕັ້ງພັກ-ລັດ, ສັງຄົມ, ການຈັດຕັ້ງສາກົນ ເຂົ້າໃນການພັດທະນາແມ່ຍິງຢ່າງມີຈຸດສຸມ.

- ແຜນຍຸດທະສາດພັດທະນາແມ່ຍິງນະຄອນຫຼວງວຽງຈັນ ຈະໄດ້ຈັດຕັ້ງຜັນຂະຫຍາຍເປັນ 2 ໄລຍະຄື: ໄລຍະທີ 1: ແຕ່ປີ 2016-2020, ໄລຍະທີ 2: ແຕ່ປີ 2021-2030.

# ໂຄງຮ່າງການຈັດຕັ້ງສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ (2009-2014)



# ໂຄງຮ່າງການຈັດຕັ້ງສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ



# ໂຄງຮ່າງການຈັດຕັ້ງສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ

